# ເງື່ອນໄຂດ້ານການທະນາຄານລວມຂອງ ANZ

<u>ພາກສະເໜີ</u>

ເງື່ອນໄຂການທະນາຄານໂດຍລວມຂອງທະນາຄານ ANZ ກຳນົດບັນດາຫຼັກການທີ່ທະນາຄານຕອບສະໜອງການບໍລິການສຳລັບລູກຄ້າທີ່ມີໜຶ່ງຫຼືຫຼາຍບັນຊີຢູ່ກັບທະນາຄານ ຊຶ່ງຕ້ອງໄດ້ອ່ານໂດຍລວມດັ່ງລຸ່ມນີ້:

(a)ຕາຕະລາງອະທິບາຍຄຳສັບແລະຕາຕະລາງປະເທດທີ່ນຳໃຊ້, ແຜນຄູ່ຮ່ວມງານ ແລະ ແຜນການບໍລິການ ຊຶ່ງແຕ່ລະອັນແມ່ນສ່ວນປະກອບຂອງເງື່ອນໄຂການທະນາຄານລວມຂອງທະນາຄານ ANZ, ແລະ

(b) ການປະກອບເອກະສານສຳລັບການເປີດບັນຊີທີ່ກ່ຽວຂ້ອງ ແລະ ຄ່າທຳນຽມ

ຍົກເວັ້ນມີການກຳນົດເປັນຢ່າງອື່ນໃນເງື່ອນໄຂການທະນາຄານລວມຂອງທະນາຄານ ANZ ນີ້ ຈະມີຄວາມໝາຍດັ່ງທີ່ກຳນົດໄວ້ໃນການນິຍາມນີ້.

1. <u>ຄວາມຮັບຜິດຊອບຂອງລູກຄ້າ</u>

1.1 <u>ສັນຍາຂອງລູກຄ້າ</u>. ລູກຄ້າຕົກລົງດັ່ງລຸ່ມນີ້:

(a) ປະກອບຂໍ້ມູນແລະເຮັດເອກະສານຕ່າງໆໃຫ້ກັບທະນາຄານຕາມທີ່ທະນາຄານອາດຈະສະເໜີຕາມລະບຽບກົດໝາຍ ຫຼື ຕາມການຕົກລົງ ຫຼື ການຈັດວາງໃດໜຶ່ງກັບອົງການຈັດຕັ້ງພາຍໃນ ຫຼື ຕ່າງປະເທດໃດໜຶ່ງ. ລູກຄ້າຮັບຮູ້ວ່າຂໍ້ມູນຂ່າວສານທັງໝົດທີ່ປະກອບໃຫ້ກັບທະນາຄານຈະເປັນຂໍ້ມູນທີ່ຖືກຕ້ອງ ຄົບຖ້ວນ ທັນການ ແລະ ບໍ່ເປັນການນຳພາໄປທາງທີ່ຜິດພາດ.

(b) ແຈ້ງໃຫ້ທະນາຄານໂດຍດ່ວນກ່ຽວກັບການປ່ຽນແປງໃດໜຶ່ງຕໍ່ກັບຂໍ້ມູນຂ່າວສານທີ່ສະໜອງໃຫ້ທະນາຄານໄປແລ້ວ. ລູກຄ້າຕົກລົງວ່າຈົນກວ່າລູກຄ້າໄດ້ແຈ້ງໃຫ້ທະນາຄານກ່ຽວກັບການປ່ຽນແປງດັ່ງກ່າວແລະທະນາຄານໄດ້ມີເວລາພຽງພໍໃນການດຳເນີນການກ່ຽວກັບແຈ້ງການດັ່ງກ່າວ, ທະນາຄານອາດຈະນຳໃຊ້ຂໍ້ມູນເກົ່າທີ່ລູກຄ້າສະໜອງໃຫ້ຜ່ານມາ.

(c) ປະຕິບັດຕາມທຸກໆການແນະນຳແລະຂັ້ນຕອນທີ່ທະນາຄານອາດຈະປະກາດນຳໃຊ້ໃນແຕ່ລະໄລຍະກ່ຽວກັບການດຳເນີນງານ ຫຼື ນຳໃຊ້ບັນຊີ ຫຼື ການບໍລິການໃດໜຶ່ງ ຍົກຕົວຢ່າງການກວດກາສິດນຳໃຊ້, ຂັ້ນຕອນການຢັ້ງຢືນ ຫຼື ຂັ້ນຕອນການຮັກສາຄວາມປອດໄພອື່ນໆທີ່ທະນາຄານອາດຈະນຳໃຊ້ເພື່ອສ້າງສັກສິດຂອງຄຳສັ່ງ ຫຼື ກ່ອນໃຫ້ການບໍລິການໃດໜຶ່ງ ຫຼື ສ່ວນໃດໜຶ່ງຂອງການບໍລິການ.

(d) ດຳເນີນການປະເມີນດ້ວຍຕົນເອງວ່າຕົນເອງມີພັນທະທາງກົດໝາຍ, ລະບຽບການ ຫຼື ອາກອນ ຫຼື ພາສີໃດໜຶ່ງທີ່ກ່ຽວຂ້ອງກັບສັນຍາ ຫຼື ບັນຊີ ຫຼື ການບໍລິການ ແລະ ປະຕິບັດຕາມພັນທະທາງກົດໝາຍ, ລະບຽບການ ຫຼື ພາສີອາກອນດັ່ງກ່າວຢູ່ທຸກໆເວລາ ຫຼື ການແນະນຳດ້ານບັນຊີກ່ຽວກັບບັນຊີໃດໜຶ່ງ ຫຼື ການບໍລິການໃດໜຶ່ງ, ຫຼື ການບໍລິການໃດໜຶ່ງທີ່ພົວພັນກັບຄວາມເໝາະສົມ ຫຼື ອັດຕາກຳໄລຈາກການແລກປ່ຽນຊື້ຂາຍໃດໜຶ່ງທີ່ພົວພັນກັບບັນຊີ ຫຼື ການບໍລິການໃດໜຶ່ງ.

(e) ແຈ້ງໃຫ້ທະນາຄານຮັບຊາບໄວເທົ່າທີ່ຈະໄວໄດ້ຖ້າມີຄວາມຜິດພາດໃດໜຶ່ງ, ຂໍ້ຂັດແຍ່ງ ຫຼື ຂໍ້ສົງໄສໃດໜຶ່ງວ່າມີການປອມແປງ ຫຼື ການເຮັດຜິດກົດໝາຍໃນດ້ານບັນຊີ, ການບໍລິການໃດໜຶ່ງ ຫຼື ຄຳສັ່ງໃດໜຶ່ງ.

(f) ນຳໃຊ້ທຸກໆຄວາມລະມັດລະວັງອື່ນໆເພີ່ມເຕີມເພື່ອປ້ອງກັນການປອມແປງ ຫຼື ການເຂົ້ານຳໃຊ້ບັນຊີທີ່ບໍ່ໄດ້ຮັບອະນຸຍາດ ຫຼື ການນຳໃຊ້ການບໍລິການ.

(g) ແຈ້ງໃຫ້ທະນາຄານຮູ້ໂດຍດ່ວນໃນເວລາມີເຫດການຍົກເລີກໃດໜຶ່ງເກີດຂຶ້ນ; ແລະ

(h) ບໍ່ສ້າງ ຫຼື ເຮັດໃຫ້ມີສິ່ງຄ້າງຄາໃນການຮັກສາຄວາມປອດໄພກ່ຽວກັບ ຫຼື ພົວພັນກັບບັນຊີ ໂດຍບໍ່ມີການເຫັນດີເຫັນພ້ອມເປັນລາຍລັກອັກສອນຈາກທະນາຄານ.

1.2 <u>ບົດບາດ ສິດ ແລະ ການນໍາໃຊ້ຕົວແທນ</u>

(a) ການນໍາໃຊ້ຕົວແທນ. ໃນເວລາລູກຄ້າແຕ່ງຕັ້ງຕົວແທນ, ລູກຄ້າ ຫຼື ຕົວແທນຈະຮັບຜິດຊອບແລະຮັບປະກັນ ແລະຕົກລົງກັບທະນາຄານວ່າ:

(i) ລູກຄ້າທີ່ແຕ່ງຕັ້ງຕົວແທນເພື່ອເຮັດວຽກແທນຕົນ (ແລະຕົວແທນຍອມຮັບການແຕ່ງຕັ້ງນັ້ນໃນນາມເປັນຕົວແທນ) ໃຫ້ເຂົ້າຮ່ວມໃນສັນຍາກັບທະນາຄານຕາງໜ້າໃຫ້ລູກຄ້າ, ແລະ ໄດ້ມອບໝາຍໃຫ້ຕົວແທນດໍາເນີນ ຫຼື ບໍ່ດໍາເນີນຕາມສັນຍາແລະບັນຊີ ຫຼື ການບໍລິການໃດໜຶ່ງພາຍໃຕ້ສັນຍາສະບັບນີ້, ລວມທັງແລະມີການພົວພັນກັບບາງຕົວຢ່າງລຸ່ມນີ້:

A. ການຮັບ ຫຼື ການເຂົ້າເຖິງຂໍ້ມູນຂ່າວສານໃດໜຶ່ງທີ່ພົວພັນກັບສັນຍາ, ບັນຊີ ຫຼື ການບໍລິການ;

B. ການດໍາເນີນນໍາໃຊ້ບັນຊີ ຫຼື ການບໍລິການ ລວມທັງການອອກຄໍາສັ່ງໃຫ້ທະນາຄານກ່ຽວຂ້ອງກັບບັນຊີ ຫຼື ການບໍລິການ;

C. ເຮັດສັນຍາໃນການຕໍ່ເຕີມ ຫຼື ດັດແປງ, ປ່ຽນແປງຄໍາເວັ້ນ ຫຼື ປ່ຽນແປງບາງຂໍ້ກໍານົດຂອງສັນຍາ, ຕົວຢ່າງເຊັ່ນການເພີ່ມເຕີມ, ການຍົກເລີກບາງການບໍລິການ.

D. ການສ້າງເອກະສານແລະຈັດຕັ້ງປະຕິບັດບາງການເຄື່ອນໄຫວທີ່ຈໍາເປັນເພື່ອສົ່ງຜົນໃຫ້ ຫຼື ເພີ່ມເຕີມປະເດັນໃດໜຶ່ງຂ້າງເທິງ;

ແລະ ລູກຄ້າຈະຢູ່ໃນຂອບຂອງທຸກການເຄື່ອນໄຫວ ຫຼື ການບໍ່ເຄື່ອນໄຫວໃດໜຶ່ງທີ່ຕົວແທນຈະເຮັດ ຫຼື ກໍໃຫ້ມີການເຮັດ ຫຼື ບໍ່ເຮັດສິ່ງນັ້ນ ຫຼື ເຮັດໃຫ້ສິ່ງໃດໜຶ່ງບໍ່ຖືກເຮັດ.

(ii) ທະນາຄານໄດ້ຮັບສິດໃນການດໍາເນີນການກັບຕົວແທນໃນນາມເປັນຕົວແທນຂອງລູກຄ້າຈົນກວ່າ ຫຼື ຍົກເວັ້ນທະນາຄານໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກລູກຄ້າວ່າຕົວແທນດັ່ງກ່າວໝົດສິດໃນການດໍາເນີນການເປັນຕົວແທນສໍາລັບລູກຄ້າ, ແລະການຍົກເລີກສິດດັ່ງກ່າວຈະບໍ່ກະທົບໃສ່ການກະທໍາໃດໜຶ່ງ ຫຼື ການບໍ່ກະທໍາໃດໜຶ່ງທີ່ຜ່ານມາຂອງຕົວແທນທີ່ປະຕິບັດຕາມລູກຄ້າ, ແລະ

(iii) ລູກຄ້າແລະຕົວແທນໄດ້ຮັບທຸກໆການເຫັນດີເຫັນພ້ອມທີ່ຈໍາເປັນແລະໄດ້ຈັດຕັ້ງທຸກໆການເຄື່ອນໄຫວ ຫຼື ຂັ້ນຕອນຕ່າງໆທີ່ຈໍາເປັນເພື່ອຮັບປະກັນວ່າການຈັດວາງທີ່ລະບຸມາຂ້າງເທິງໄດ້ຮັບການດໍາເນີນດ້ວຍຄວາມຮັບຜິດຊອບທີ່ເໝາະສົມ ແລະປະຕິບັດຕາມບັນດາເງື່ອນໄຂທາງດ້ານສັນຍາ ຫຼື ທາງກົດໝາຍທີ່ກ່ຽວຂ້ອງ.

(b) ທະນາຄານຈະເຮັດວຽກກັບລູກຄ້າເທົ່ານັ້ນ. ທະນາຄານຈະບໍ່ມີພັນທະໃນການເຮັດວຽກກັບຕົວແທນໃດໜຶ່ງແຕ່ອາດຈະເລືອກ

ຕັ້ງໃຫ້ເຮັດແນວນັ້ນຕາມການຕັດດສິນໃຈຂອງຕົນເທົ່ານັ້ນແລະປະຕິບັດຕາມບັນດາເງື່ອນໄຂ, ຂໍ້ຈຳກັດ ຫຼື ຂໍ້ຫ້າມທີ່ທະນາຄານອາດຈະກຳນົດໃນແຕ່ລະໄລຍະ. ຍົກເວັ້ນມີການຕົກລົງກັນເປັນຢ່າງອື່ນຈາກທະນາຄານ, ໃນເຫດການທີ່ມີຂໍ້ຂັດແຍ້ງເກີດຂຶ້ນຈາກ ຫຼື ພົວພັນກັບສັນຍາສະບັບນີ້ (ລວມທັງຜົນຂອງການກະທຳ ຫຼື ການບໍ່ກະທຳຂອງຕົວແທນ), ທະນາຄານຈະປະຕິບັດພຽງແຕ່ກັບລູກຄ້າເທົ່ານັ້ນ.

1.3 <u>ຜູ້ທີ່ໄດ້ຮັບການແຕ່ງຕັ້ງ</u>. ລູກຄ້າຮັບຮູ້ ແລະ ຕົກລົງວ່າ:

(a) ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງໄດ້ຮັບການອະນຸຍາດຈາກລູກຄ້າໃຫ້ອອກຄຳສັ່ງ, ດຳເນີນການເຄື່ອນໄຫວ ຫຼື ພັນທະໃດໜຶ່ງພາຍໃນສັນຍາສະບັບນີ້ເພື່ອແລະໃນນາມລູກຄ້າແລະປະຕິບັດຕາມລູກຄ້າພາຍໃຕ້ສັນຍາແລະການແລກປ່ຽນຊື້ຂາຍໃດໜຶ່ງທີ່ຕາມສັນຍາສະບັບນີ້ທີ່ພົວພັນກັບບັນຊີ ຫຼື ການບໍລິການ.

(b) ລູກຄ້າຮັບຜິດຊອບຕໍ່ທະນາຄານໃນການທຸກໆຄຳສັ່ງທີ່ໄດ້ເຊັນກັນ, ສ້າງຂຶ້ນ, ສົ່ງ ຫຼື ເອົາໃຫ້ໂດຍບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ແລະທຸກການເຄື່ອນໄຫວຂອງບຸກຄົນທີ່ໄດ້ຮັບການແຕ່ງຕັ້ງໃດໜຶ່ງ (ລວມທັງຄ່າທຳນຽມ, ຄ່າບໍລິການແລະພັນທະໜີ້ສິນທີ່ເກີດຂຶ້ນ ຫຼື ໄດ້ຮັບການເກີດຂຶ້ນ ຫຼື ເກີດຂຶ້ນຈາກຄຳສັ່ງ ຫຼື ການເຄື່ອນໄຫວດັ່ງກ່າວ);

(c) ທະນາຄານອາດຈະອີງໃສ່ຄຳສັ່ງ ຫຼື ການຕົກລົງໃດໜຶ່ງທີ່ມີລາຍເຊັນ, ສ້າງຂຶ້ນ, ສົ່ງໃຫ້ ຫຼື ເອົາໃຫ້ໂດຍຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຫຼື ຜູ້ທີ່ເຫັນວ່າ ຫຼື ປະກົດວ່າເປັນຜູ້ຮັບຜິດຊອບແລະໄດ້ຮັບການລົງລາຍເຊັນ, ສ້າງຂຶ້ນ, ສົ່ງໃຫ້ ຫຼື ເອົາໃຫ້ໂດຍຜູ້ທີ່ໄດ້ຮັບການແຕ່ງຕັ້ງໂດຍບຸກຄົນທີ່ມັນປະສົງຕ້ອງຖືກເຊັນ, ສ້າງຂຶ້ນ, ສົ່ງໃຫ້ ຫຼື ເອົາໃຫ້, ໂດຍບໍ່ຂັດກັບສິ່ງທີ່ວ່າລູກຄ້າໄດ້ກ່າວຫາວ່າຄຳສັ່ງ ຫຼື ການຕົກລົງດັ່ງກ່າວບໍ່ໄດ້ຖືກຮັບຮອງຈາກລູກຄ້າ.

(d) ຜູ້ໄດ້ຮັບການແຕ່ງຕັ້ງແຕ່ລະຄົນຈະສືບຕໍ່ໄດ້ຮັບອະນຸຍາດຈົນກວ່າເວລາທີ່ທະນາຄານໄດ້ຮັບແຈ້ງການເປັນລາຍລັກອັກສອນຈາກລູກຄ້າທີ່ປີ້ນກັບແລະຈົນກວ່າໄດ້ຮັບແຈ້ງການດັ່ງກ່າວ, ທະນາຄານຈະມີສິດນຳໃຊ້ແລະຈະໄດ້ຮັບການປົກປ້ອງຢ່າງເຕັມສ່ວນໃນການດຳເນີນ, ຂໍ້ມູນຂ່າວສານທີ່ພົວພັນກັບບັນດາຜູ້ທີ່ໄດ້ຮັບການແຕ່ງຕັ້ງທີ່ທະນາຄານໄດ້ຮັບມາກ່ອນ.

(e) ທະນາຄານອາດຈະຮຽກຮ້ອງໃຫ້ຜູ້ທີ່ໄດ້ຮັບການແຕ່ງຕັ້ງເພື່ອໄດ້ຮັບການກຳນົດຕາມກົດໝາຍ ຫຼື ເງື່ອນໄຂອື່ນໆທີ່ກຳນົດຂຶ້ນຢ່າງສົມເຫດສົມຜົນຈາກທະນາຄານ. ທະນາຄານອາດຈະຕາມການພິຈາລະນາຂອງຕົນບໍ່ປຸງແຕ່ງ ຫຼື ດຳເນີນຕາມຄຳສັ່ງໃດໜຶ່ງຈົນກວ່າມັນໄດ້ສຳເລັດການຢັ້ງຢືນການກວດກາຄວາມເປັນເຈົ້າຂອງທີ່ຈຳເປັນຕາມລະບຽບກົດໝາຍ.

(f) ໃນເມື່ອທະນາຄານໄດ້ຕົກລົງສະໜອງໃຫ້ລູກຄ້າການບໍລິການການຊຳລະທີ່ເປັນຄວາມລັບ, ມັນຈະເປັນຄວາມຮັບຜິດຊອບຂອງລູກຄ້າໃນການຮັບປະກັນວ່າມີພຽງແຕ່ບຸກຄະລາກອນທີ່ກ່ຽວຂ້ອງເທົ່ານັ້ນທີ່ໄດ້ຮັບການຄັດເລືອກແລະຮັບການແຕ່ງຕັ້ງຈາກລູກຄ້າໄດ້ຮັບການແຕ່ງຕັ້ງໃຫ້ເປັນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງກ່ຽວຂ້ອງ

ກັບການບໍລິການການຊຳລະທີ່ເປັນຄວາມລັບດັ່ງກ່າວ.

1.4 ຊ່ອງທາງການສື່ສານແລະຄຳສັ່ງຕ່າງໆ

(a) ຊ່ອງທາງແລະຄຳສັ່ງ. ລູກຄ້າຕົກລົງຈະ:

(i) ນຳໃຊ້ພຽງແຕ່ຊ່ອງທາງດຽວເພື່ອຈຸດປະສົງໃນການເຂົ້າເຖິງບັນຊີ ຫຼື ນຳໃຊ້ການບໍລິການ ຫຼື ໃຫ້ຄຳສັ່ງ.

(ii) ປະຕິບັດຕາມທຸກໆກົດໝາຍທີ່ກ່ຽວຂ້ອງ, ການອອກຄຳສັ່ງແລະການແລກປ່ຽນຊື້ຂາຍທີ່ສ້າງຂຶ້ນຜ່ານຊ່ອງທາງໃດໜຶ່ງ.

(iii) ເພື່ອຮັບປະກັນວ່າການຄຳສັ່ງໃດໜຶ່ງຖືກຕ້ອງ, ຄົບຖ້ວນ ແລະໄດ້ຮັບອະນຸມັດ ແລະ ວ່າທະນາຄານດັ່ງກ່າວມີສິດເຮັດໜ້າທີ່ດັ່ງກ່າວ.

(iv) ທຸກໆຄຳສັ່ງແມ່ນບໍ່ສາມາດປີ້ນຄືນໄດ້.

(v) ທະນາຄານອາດຈະດຳເນີນ (ແຕ່ບໍ່ຈຳເປັນຈະ) ສອບຖາມກ່ຽວກັບ ຫຼື ພະຍາຍາມຢືນຢັນຄວາມຖືກຕ້ອງຂອງຄຳສັ່ງໃດໜຶ່ງ.

(vi) ທະນາຄານອາດຈະດຳເນີນຕາມຄຳສັ່ງໃດໜຶ່ງເຖິງແມ່ນວ່າຖ້າຫາກຄຳສັ່ງດັ່ງກ່າວຄັດກັບ ຫຼື ບໍ່ສອດຄ່ອງກັບຄຳສັ່ງອື່ນໆທີ່ທະນາຄານໄດ້ຮັບ.

(vii) ຖ້າຫາກລູກຄ້າຮຽກຮ້ອງ ທະນາຄານຈະນຳໃຊ້ທຸກໆຄວາມພະຍາຍາມເພື່ອຍົກເລີກການແລກປ່ຽນຊື້ຂາຍ (ໃນນັ້ນລວມເອົາການຊຳລະ) ທີ່ທະນາຄານໄດ້ດຳເນີນໃບຮັບຄຳສັ່ງລຸ່ມນີ້ ຫຼື, ຖ້າບໍ່ດຳເນີນ, ເພື່ອຢຸດການດຳເນີນການການແລກປ່ຽນຊື້ຂາຍຕໍ່ໄປ (ລວມທັງ ຕາມແຕ່ລະກໍລະນີ, ການຊຳລະ) ແລະ ທະນາຄານຈະບໍ່ມີໜີ້ສິນຕໍ່ການທີ່ບໍ່ສາມາດດຳເນີນ.

(viii) ທະນາຄານອາດຈະປະຕິເສດໃນການປະຕິບັດຕາມຄຳສັ່ງຖ້າຫາກວ່າ:

(A)ຄຳສັ່ງດັ່ງກ່າວບໍ່ໄດຮັບກ່ອນກຳນົດເວລາໃດໜຶ່ງ;

(B)ຄຳສັ່ງດັ່ງກ່າວບໍ່ຖືກຕ້ອງ, ບໍ່ສົມບູນ, ບໍ່ຈະແຈ້ງ ຫຼື ບໍ່ສອດຄ່ອງກັບ ຫຼື ບໍ່ປະຕິບັດຕາມແບບຟອມທີ່ທະນາຄານກຳນົດ ຫຼື ຕົກລົງກັບທະນາຄານ.

(C) ຄຳສັ່ງດັ່ງກ່າວປະກົດວ່າບໍ່ໄດ້ຮັບອະນຸຍາດ, ບໍ່ສັກສິດ; ຫຼື ເປັນການລະເມີດມາດຕະການຮັບປະກັນຄວາມປອດໄພໃດໜຶ່ງ.

(D) (ຈະເປັນການພົວພັນກັບຄຳສັ່ງກ່ຽວກັບວັນທີມູນຄ່າໃນອະນາຄົດໃດໜຶ່ງ ຫຼື ອື່ນໆ) ມູນຄ່າການຖອນໃນຄຳສັ່ງເກີນທຶນທີ່ມີໃນບັນຊີທີ່ກ່ຽວຂ້ອງໃນເວລາທີ່ກ່ຽວຂ້ອງ ຫຼື ຂີດກຳນົດສູງສຸດທີ່ທະນາຄານອະນຸຍາດ ຫຼືຕົກລົງຈາກລູກຄ້າ.

(E) ຄຳສັ່ງດັ່ງກ່າວບໍ່ຢູ່ພາຍໃນຂອບເຂດການດຳເນີນງານໃດໜຶ່ງທີ່ທະນາຄານກຳນົດ ຫຼື ຂີດກຳນົດ ຫຼື ຂອບເຂດອະນຸມັດທີ່ລູກຄ້າກຳນົດ (ໃນເມື່ອຖືກປ່ຽນເປັນສະກຸນເງິນທີ່ກ່ຽວຂ້ອງໃນອັດຕາທີ່ກ່ຽວຂ້ອງ).

(F)ຮັບເອົາ ຫຼື ປະຕິບັດຕາມຄຳສັ່ງອາດຈະຮຽກຮ້ອງໃຫ້ມີການກະທຳຂອງຫຼືຈາກທະນາຄານໃນວັນທີ່ບໍ່ແມ່ນວັນລັດຖະການ.

(G) ຮັບເອົາ ຫຼື ປະຕິບັດຕາມຄຳສັ່ງອາດຈະກໍ່ໃຫ້ເກີດການລະເມີດສັນຍາອື່ນໃດໜຶ່ງລະຫວ່າງທະນາຄານແລະລູກຄ້າ ຫຼື ກົດໝາຍທີ່ກ່ຽວຂ້ອງ, ການລົງໂທດ, ເງື່ອນໄຂຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ນະໂຍບາຍພາຍໃນທີ່ພົວພັນກັບການຄຸ້ມຄອງບໍລິສັດ, ການຄຸ້ມຄອງຄວາມສ່ຽງ ຫຼື ການກວດສອບ; ຫຼື

(H) ມີການຍົກເລີກເກີດຂຶ້ນ.

(b) ຊ່ອງທາງການທະນາຄານທາງເອເລັກໂຕຣນິກ. ກ່ຽວກັບຊ່ອງທາງການທະນາຄານທາງເອເລັກໂຕຣນິກ, ລູກຄ້າຮັບຮູ້ແລະຕົກລົງວ່າ:

(i) ລູກຄ້າຈະຮັບຜິດຊອບພຽງຜູ້ດຽວຕໍ່ການກຳນົດແລະສ້າງຜູ້ນຳໃຊ້ທີ່ເໝາະສົມແລະຮັບປະກັນວ່າມີພຽງແຕ່ຜູ້ຊົມໃຊ້ເທົ່ານັ້ນສາມາດນຳໃຊ້ຊ່ອງທາງການທະນາຄານທາງເອເລັກໂຕຣນິກ ແລະ ໃນເວລາຈຳເປັນສ້າງຕາຕະລາງ ຫຼືໜ້າວຽກທີ່ເໝາະສົມກ່ຽວກັບຜູ້ຊົມໃຊ້.

(ii) ຄຳສັ່ງທີ່ສົ່ງຜ່ານຊ່ອງທາງການທະນາຄານທາງເອເລັກໂຕຣນິກຈະຖືກກົດໝາຍ, ນຳໃຊ້ໄດ້ແລະມີຜົນບັງຄັບໃຊ້ກັບລູກຄ້າແລະຈະມີຜົນບັງຄັບໃຊ້ທາງກົດໝາຍຖືກຕ້ອງແລະສາມາດນຳໃຊ້ໄດ້ຄືກັນກັບວ່າມັນໄດ້ຮັບການລົງລາຍເຊັນເປັນລາຍລັກອັກສອນ.

(iii) ທະນາຄານຈະສະໜອງໃຫ້ລູກຄ້າເຄື່ອງມືດ້ານຄວາມປອດໄພສຳລັບນຳໃຊ້ໂດຍລູກຄ້າເພື່ອເຂົ້ານຳໃຊ້ຊ່ອງທາງການທະນາຄານທາງເອເລັກໂຕຣນິກ. ສິດແລະໜ້າທີ່ທັງໝົດໃນເຄື່ອງມືດ້ານຄວາມປອດໄພດັ່ງກ່າວເປັນຂອງທະນາຄານແລະຈະຍັງເປັນກຳມະສິດຂອງທະນາຄານ. ລູກຄ້າຈະສົ່ງເຄື່ອງມືດ້ານຄວາມປອດໄພໃຫ້ທະນາຄານໄວເທົ່າທີ່ຈະໄວໄດ້ຖ້າຫາກສິດຂອງຜູ້ຊົມໃຊ້ໃນການເຂົ້ານຳໃຊ້ຊ່ອງທາງການທະນາຄານທາງເອເລັກໂຕຣນິກຖືກຍົກເລີກ ແລະ/ຫຼື ທະນາຄານຮຽກຮ້ອງແບບໃດແບບໜຶ່ງ.

(iv) ທະນາຄານບໍ່ນຳສະເໜີ ຫຼື ຮັບປະກັນໃດໜຶ່ງ (ຖ້າເປັນການສະແດງອອກ ຫຼື ບໍ່ສະແດງອອກກໍຕາມ) ວ່າເປັນຄຸນນະພາບໜ້າເພິ່ງພໍໃຈ, ສາມາດຂາຍເປັນສິນຄ້າ ຫຼື ເໝາະສົມສຳລັບຈຸດປະສົງຂອງເຄື່ອງມືດ້ານຄວາມປອດໄພ ແລະ ທະນາຄານຈະບໍ່ມີພັນທະຕໍ່ການເສຍຫາຍ ຫຼື ການຫຼຸດລົງດ້ານການປະຕິບັດງານຂອງລະບົບຄອມພິວເຕີຂອງລູກຄ້າ ຫຼື ສ່ວນໃດໜຶ່ງຂອງມັນ ຫຼື ຜົນສະທ້ອນອື່ນໆທີ່ເກີດຈາກການນຳໃຊ້ເຄື່ອງມືດ້ານຄວາມປອດໄພດັ່ງກ່າວ;

(v) ຂໍ້ມູນຂ່າວສານທີ່ທະນາຄານສະໜອງໃຫ້ໂດຍຜ່ານຊ່ອງທາງການທະນາຄານທາງເອເລັກໂຕຣນິກອາດຈະຖືກປັບປຸງໃນຊ່ວງໄລຍະໃດໜຶ່ງທີ່ແນ່ນອນ ແລະ ອາດຈະບໍ່ເບິ່ງຕາມຄຳສັ່ງທີ່ສັ່ງມາ ຫຼື ການແລກປ່ຽນທີ່ເຮັດຜ່ານຊ່ອງທາງການທະນາຄານທາງເອເລັກໂຕຣນິກໃນເວລາໃດໜຶ່ງ.

(c) ຊ່ອງທາງທີ່ບໍ່ເໝາະສົມ. ໃນເວລາທີ່ຄຳສັ່ງຖືກສົ່ງຜ່ານຊ່ອງທາງທີ່ບໍ່ເໝາະສົມ ລູກຄ້າຮັບຮູ້ແລະຕົກລົງວ່າ:

(i) ລູກຄ້າຍອມຮັບວ່າຄວາມສ່ຽງໃດໜຶ່ງໃນການລິເລີ່ມແລະສົ່ງຄຳສັ່ງຜ່ານຊ່ອງທາງທີ່ບໍ່ເໝາະສົມ (ທີ່ມັນຮັບຮູ້ວ່າບໍ່ເປັນວິທີທີ່ປອດໄພໃນການສົ່ງຄຳສັ່ງແລະລູກຄ້າກຳລັງນຳໃຊ້ຊ່ອງທາງທີ່ບໍ່ປອດໄພເພື່ອຄວາມສະດວກຂອງຕົນເອງ ແລະ ຜົນປະໂຫຍດດ້ານປະສິດທິພາບອື່ນໆ) ລວມທັງຄວາມສ່ຽງທີ່ວ່າຄຳສັ່ງອາດຈະຖືກສັ່ງອອກໄປດ້ວຍຄວາມຜິດພາດ ຫຼື ຖືກປ່ຽນແປງ ຫຼື ຄຳສັ່ງ ຫຼື ການສະເໜີ ຫຼື ຄຳສັ່ງທີ່ຖືກສ້າງຂຶ້ນໃຫ້ເປັນຄຳສັ່ງ ອາດຈະຖືກສັ່ງອອກໄປແບບຈອມປອມປ່ຽນແປງ ຫຼື ບໍ່ໄດ້ຮັບອະນຸມັດຈາກລູກຄ້າແລະທະນາຄານໄດ້ດຳເນີນໄປ.

(ii) ທະນາຄານບໍ່ມີພັນທະໃນການເຄື່ອນໄຫວ ຫຼື ອີງຕາມຄຳສັ່ງດັ່ງກ່າວ ແຕ່ຖ້າຫາກທະນາຄານເລືອກດັ່ງນັ້ນ (ຕາມການຕັດສິນໃຈຂອງຕົນ) ໃນການດຳເນີນການກວດການຢັ້ງຢືນ ຫຼື ມາດຕະການຮັກສາຄວາມປອດໄພຕາມ

ຄວາມຈຳເປັນ (ໂດຍບໍ່ກ່ຽວຂ້ອງກັບປະເພດ ຂອງການແລກປ່ຽນຊື້ຂາຍ ຫຼື ການຈັດວາງ ຫຼື ມູນຄ່າຂອງເງິນທີ່ກ່ຽວຂ້ອງ) ແລະ

(iii) ໃນເມື່ອທະນາຄານເລືອກທີ່ຈະດຳເນີນ ຕາມຄຳສັ່ງ, ທະນາຄານມີສິດຖືວ່າຄຳສັ່ງດັ່ງ ກ່າວໄດ້ຮັບການອະນຸຍາດຢ່າງເຕັມສ່ວນໂດຍ ແລະມີຜົນສັກສິດຕໍ່ລູກຄ້າ (ເຖິງວ່າຈະມີການ ກວດກາການຢືນຢັນ ຫຼື ມາດຕະການຮັກສາ ຄວາມປອດໄພອື່ນໆຈະຖືກດຳເນີນຫຼືບໍ່ກໍ ຕາມ).

(d) ການບັນທຶກການສື່ສານ. ປະຕິບັດຕາມກົດ ໝາຍທີ່ກ່ຽວຂ້ອງ ຝ່າຍໃດໜຶ່ງອາດຈະບັນທຶກ ການສື່ສານທາງໂທລະສັບລະຫວ່າງພວກເຂົາ ເອງເພື່ອຄວບຄຸມຄຸນນະພາບ, ກວດສອບ ຄວາມປອດໄພ ແລະ ເປັນການປະຕິບັດຕາມ ລະບຽບກົດໝາຍແລະອາດຈະຜະລິດການ ບັນທຶກການສື່ສານດັ່ງກ່າວເປັນຫຼັກຖານໃນ ການດຳເນີນຄະດີທີ່ເກີດຂຶ້ນກັບສັນຍາສະບັບນີ້.

1.5 <u>ການຕ້ານການຟອກເງິນ</u>.

(a) ໂດຍບໍ່ຂັດກັບບັນຍັດໃດໜຶ່ງຂອງສັນຍາສະບັບ ນີ້, ທະນາຄານບໍ່ຮັບຜິດຊອບໃນການເຮັດ ຫຼື ບໍ່ເຮັດສິ່ງໃດໜຶ່ງຖ້າຫາກມັນຈະ ຫຼື ອາດຈະ ໃນຄວາມຄິດຄວາມເຫັນຂອງຕົນ, ປະກອບ ເປັນການລະເມີດລະບຽບການຕ້ານການຟອກ ເງິນ, ການສະໜອງທຶນຕ້ານການກໍ່ການຮ້າຍ ຫຼື ກົດໝາຍວ່າດ້ວຍການໃສ່ໂທດດ້ານເສດ ຖະກິດ ຫຼື ການຄ້າ ຫຼື ລະບຽບການ ກ່ຽວກັບປະເດັນດັ່ງກ່າວທີ່ກ່ຽວຂ້ອງກັບ ທະນາຄານ.

(b) ລູກຄ້າຕ້ອງສະໜອງໃຫ້ກັບທະນາຄານທຸກໆຂໍ້ ມູນຂ່າວສານແລະເອກະສານທີ່ຕົນມີໃນຄອບຄອງ ຫຼື ສາມາດຄວບຄຸມຕາມການຮຽກຮ້ອງຈາກ ທະນາຄານຢ່າງສົມເຫດສົມຜົນເພື່ອໃຫ້ທະນາຄານ ສາມາດປະຕິບັດກັບລະບຽບການຕ້ານການຟອກ ເງິນ, ການສະໜອງດ້ານການເງິນເພື່ອຕ້ານ ການກໍ່ການຮ້າຍ, ກົດໝາຍວ່າດ້ວຍການລົງໂທດ ທາງເສດ ຖະກິດ ຫຼື ການຄ້າ ຫຼື ລະບຽບການ ດັ່ງກ່າວທີ່ກ່ຽວ ຂ້ອງກັບທະນາຄານ.

(c) ລູກຄ້າຕົກລົງວ່າທະນາຄານອາດຈະເປີດເຜີຍຂໍ້ ມູນຂ່າວສານໃດໜຶ່ງທີ່ພົວພັນກັບລູກຄ້າໃຫ້ອົງການ ທາງກົດໝາຍ, ອົງການຮັກສາລະບຽບການ ຫຼື ສານ ຕາມລະບຽບກົດໝາຍ.

(d) ລູກຄ້າຕົກລົງຈະປະຕິບັດສິດຂອງຕົນແລະ ພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້ຕາມລະ ບຽບການປ້ອງກັນການຟອກເງິນ, ການສະໜອງ ທຶນຕ້ານການກໍ່ການຮ້າຍ, ລະບຽບກົດໝາຍກ່ຽວ ກັບການລົງໂທດດ້ານເສດຖະກິດ ຫຼື ດ້ານການຄ້າ.

(e) ລູກຄ້າແຈ້ງວ່າຕົນເອງດຳເນີນດ້ວຍຕົນເອງ ແລະ ບໍ່ແມ່ນເປັນຜູ້ມອບໝາຍ ຫຼື ຄວາມສາມາດ ດ້ານການເປັນຕົວແທນ, ຍົກເວັ້ນມີການເປີດເຜີຍ ເປັນຢ່າງອື່ນໃຫ້ທະນາຄານ.

<u>1.6 ຊັບສິນທາງປັນຍາ</u>

(a) ລູກຄ້າຮັບຮູ້ແລະຕົກລົງວ່າຊັບສິນທາງປັນຍາ ທັງໝົດໃນດ້ານເອກະສານ, ຊອບແວ, ຂໍ້ມູນ, ສິ່ງ ຂອງ ຫຼື ຂະບວນການປະກອບເປັນສ່ວນໜຶ່ງຂອງ ຫຼື ນຳໃຊ້ໃນການພົວພັນກັບບັນຊີ ຫຼື ການບໍລິການ ຫຼື ຊ່ອງທາງໃດໜຶ່ງແມ່ນອາດຈະເປັນຂອງທະນາ ຄານ ຫຼື ຜູ້ສະໜອງບໍລິການບຸກຄົນທີສາມຂອງມັນ ແລະວ່າລູກຄ້າບໍ່ມີ ແລະ ການດຳເນີນ ຫຼື ນຳໃຊ້ ບັນຊີໃດໜຶ່ງ ຫຼື ການບໍລິການໃດໜຶ່ງ ຫຼື ຊ່ອງທາງ ໃດໜຶ່ງບໍ່ໄດ້ໃຫ້ລູກຄ້າມີສິດໃດໜຶ່ງ, ຕຳແໜ່ງ ຫຼື ຜົນປະໂຫຍດໃດໜຶ່ງໃນສິດຕໍ່ຊັບສິນທາງປັນຍາ.

(b) ລູກຄ້າຕົກລົງແລະດຳເນີນວ່າຈະບໍ່ເຮັດສິ່ງ ໃດໜຶ່ງທີ່ລົບກວນ, ເກືອດຫ້າມ ຫຼື ມີຜົນກະທົບ ທາງລົບຕໍ່ສິດໃນຊັບສິນທາງປັນຍາທີ່ເປັນສ່ວນໜຶ່ງ ຫຼື ນຳໃຊ້ກັບບັນຊີ ຫຼື ການບໍລິການ ຫຼື ຊ່ອງທາງ.

# ເງື່ອນໄຂດ້ານການທະນາຄານລວມຂອງ ANZ

## 2. ຄວາມຮັບຜິດຊອບຂອງທະນາຄານ

**2.1 ການບໍລິການ ແລະ ແຜນການບໍລິການ.** ທະນາຄານຈະສະໜອງໜຶ່ງ ຫຼື ຫຼາຍການບໍລິການໃຫ້ແກ່ລູກຄ້າຕາມການຕົກລົງເປັນແຕ່ລະໄລຍະກັບທະນາຄານ. ໃນກໍລະນີຖ້າການສະໜອງການບໍລິການບໍ່ໄດ້ຖືກກໍານົດໄວ້ໃນເງື່ອນໄຂ, ໃຫ້ຖືເອົາແຜນການສະໜອງການບໍລິການ (Service Schedule) ດັ່ງກ່າວ.

**2.2 ຜູ້ຮັບເໝົາ, ຕົວແທນ ແລະລະບົບບຸກຄົນທີສາມເອກະລາດ.** ທະນາຄານອາດຈະນໍາໃຊ້ບຸກຄົນທີສາມ ຫຼື ລະບົບບຸກຄົນທີສາມທີ່ພົວພັນກັບການບໍລິການໃດໜຶ່ງ. ໃນເມື່ອທະນາຄານແຕ່ງຕັ້ງບຸກຄົນທີສາມ ຫຼື ລະບົບບຸກຄົນທີສາມ ຍົກເວັ້ນມີການຕົກລົງເປັນຢ່າງອື່ນກັບລູກຄ້າ ທະນາຄານຈະຮັບຜິດຊອບພຽງແຕ່ຕາມທີ່ໄດ້ລະບຸໄວ້ໃນເງື່ອນໄຂທີ 2.4 ທີ່ກ່ຽວກັບບຸກຄົນທີສາມໃດໜຶ່ງທີ່ເປັນຕົວແທນ ແລະບໍ່ແມ່ນຢ່າງອື່ນ. ທະນາຄານຈະບໍ່ຮັບຜິດຊອບຕໍ່ການສູນເສຍໃດໆຂອງລູກຄ້າໃນເມື່ອລູກຄ້າແຕ່ງຕັ້ງ ຫຼື ເລືອກນໍາໃຊ້ທຸກຄົນທີສາມ ຫຼື ລະບົບບຸກຄົນທີສາມ.

**2.3 ບົດບາດຂອງທະນາຄານ.** ທະນາຄານຈະບໍ່ດໍາເນີນເປັນຜູ້ໄດ້ຮັບຜົນປະໂຫຍດສໍາລັບ ຫຼື ເປັນທີ່ປຶກສາສໍາລັບລູກຄ້າທີ່ພົວພັນກັບສັນຍາສະບັບນີ້ ຫຼື ການແລກປ່ຽນຊື້ຂາຍໃດໜຶ່ງໃນສັນຍາສະບັບນີ້.

**2.4 ຄວາມຮັບຜິດຊອບດ້ານໜີ້ສິນຂອງທະນາຄານ.** ທະນາຄານຈະບໍ່ຮັບຜິດຊອບດ້ານໜີ້ສິນຕໍ່ລູກຄ້າ ຫຼື ຕົວແທນໃດໜຶ່ງໃນດ້ານການສູນເສຍໃດໜຶ່ງທີ່ເກີດຂຶ້ນ ຫຼື ທີ່ອາດເກີດຂຶ້ນໂດຍທາງກົງ ຫຼື ທາງອ້ອມທີ່ມີການພົວພັນກັບບັນຊີ ຫຼື ການບໍລິການ. ໃນເງື່ອນໄຂທີ່ວ່າທະນາຄານຈະຮັບຜິດຊອບຕໍ່ລູກຄ້າ ຫຼື ຕົວແທນຂອງມັນ ຖ້າມີ ຕໍ່ການສູນເສຍໂດຍກົງໃນເງື່ອນໄຂທີ່ວ່າການສູນເສຍດັ່ງກ່າວເກີດຈາກການບໍ່ລະມັດລະວັງຂອງທະນາຄານ (ຫຼື ຕົວແທນຂອງມັນ), ຫຼື ເປັນການເຈດຕະນາ ຫຼື ການປອມແປງ. ເພື່ອຫຼີກເວັ້ນຂໍ້ສົງໄສ ທະນາຄານຈະບໍ່ຮັບຜິດຊອບຕໍ່ລູກຄ້າ ຫຼື ຕົວແທນຂອງມັນຖ້າເປັນການສູນເສຍ ຫຼື ການເສຍຫາຍທາງອ້ອມ ເຫດບັງເອີນ ຫຼື ເປັນຜົນຕໍ່ເນື່ອງມາຈາກສິ່ງອື່ນ (ລວມທັງການເສຍຫາຍພິເສດ ຫຼື ການປະຕິບັດວິໄນ).

**2.5 ການປະຕິບັດຕາມການກວດກາການຢັ້ງຢືນ ແລະ ຂັ້ນຕອນດ້ານຄວາມປອດໄພ.** ທະນາຄານຈະບໍ່ມີພັນທະໃນເວລາໃດກໍຕາມໃນການດໍາເນີນການບໍລິການ ຫຼື ສ່ວນໃດສ່ວນໜຶ່ງຂອງການບໍລິການໃນເຫດການທີ່ການກວດກາການເປັນເຈົ້າຂອງ, ຂັ້ນຕອນການຢັ້ງຢືນ, ຫຼື ຂັ້ນຕອນການຮັກສາຄວາມປອດໄພໃດໜຶ່ງທີ່ທະນາຄານ ອາດຈະໃນການຕັດສິນໃຈຂອງຕົນເອງປະກາດນໍາໃຊ້ກັບການບໍລິການຍັງບໍ່ທັນໄດ້ຖືກປະຕິບັດເປັນໜ້າເພິ່ງພໍໃຈຂອງຕົນ.

**2.6 ການເສຍຫາຍທີ່ເກີດຈາກເຫດສຸດວິໄສ.** ໂດຍບໍ່ຂັດກັບສິ່ງທີ່ໄດ້ກ່າວມາຂ້າງເທິງ ທະນາຄານຈະບໍ່ຮັບຜິດຊອບ ຫຼື ມີໜີ້ສິນໃນການສູນເສຍໃດໜຶ່ງທີ່ເກີດຂຶ້ນກັບລູກຄ້າເນື່ອງຈາກເຫດສຸດວິໄສ.

## 3. ບັນຊີແລະການບໍລິການ

**3.1 ການເປີດບັນຊີ.** ທະນາຄານຈະເປີດ ແລະ ຮັກສາໄວ້ໜຶ່ງ ຫຼື ຫຼາຍບັນຊີສໍາລັບລູກຄ້າເປັນແຕ່ລະໄລຍະ ຕາມທະນາຄານເຫັນດີ. ການເປີດ ແລະດໍາເນີນການແຕ່ລະບັນຊີຈະຕ້ອງປະຕິບັດຕາມສັນຍາສະບັບນີ້, ກົດໝາຍທີ່ກ່ຽວຂ້ອງ, ການລົງໂທດ ແລະ ລະບຽບການຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

**3.2 ປະເພດບັນຊີ**

(a) ທະນາຄານອາດຈະຕາມການຕັດສິນໃຈຂອງຕົນຕົກລົງສະໜອງໃຫ້ແກ່ລູກຄ້າໜຶ່ງ ຫຼື ຫຼາຍບັນຊີ

ກະແສລາຍວັນ, ບັນຊີຝາກເປັນໄລຍະ ຫຼື ບັນຊີຝາກປະຈໍາ.

(b) ລູກຄ້າຈະສະໜອງໃຫ້ທະນາຄານຄໍາສັ່ງທີ່ຈໍາເປັນກ່ຽວກັບການບໍາລຸງຮັກສາແລະຈັດການກັບບັນຊີຝາກປະຈໍາ ຫຼື ບັນຊີຝາກເປັນໄລຍະໃນເວລາຮອດກໍານົດ. ໃນເວລາບໍ່ມີຄໍາສັ່ງ ທະນາຄານອາດຈະ (ແຕ່ບໍ່ມີພັນທະທີ່ຈະເຮັດແນວນັ້ນ) ຕໍ່ບັນຊີຝາກເປັນໄລຍະ ຫຼື ບັນຊີຝາກປະຈໍາໂດຍການເອົາເຮັດຄືກັບການຝາກເງິນໃໝ່, ຕົ້ນທຶນເງິນຝາກບວກກັບດອກເບ້ຍສໍາລັບໄລຍະເວລາຝາກຕາມທີ່ເຫັນວ່າເໝາະສົມ ຫຼື ຕາມການອະນຸມັດພາຍໃຕ້ກົດໝາຍ. ດອກເບ້ຍຈະຈ່າຍໃຫ້ໂດຍອີງໃສ່ອັດຕາທີ່ທະນາຄານກໍານົດ ຫຼື ຕາມການຕົກລົງລະຫວ່າງທະນາຄານແລະລູກຄ້າ. ການຖອນທີ່ເກີດຂຶ້ນກ່ອນກໍານົດຈະເຮັດໄດ້ກໍຕໍ່ເມື່ອມີການເຫັນດີເປັນລາຍລັກອັກສອນຂອງທະນາຄານ ແລະ ຕາມຂໍ້ກໍານົດແລະເງື່ອນໄຂທີ່ທະນາຄານອາດນໍາໃຊ້ໃນແຕ່ລະໄລຍະ. ທະນາຄານອາດຈະຮັກສາໄວ້ສ່ວນໜຶ່ງຫຼືດອກເບ້ຍທັງໝົດທີ່ຕ້ອງຈ່າຍ ຫຼື ອາດຈະເກັບຄ່າໃນບັນຊີເງິນຝາກປະຈໍາ ຫຼື ຝາກເປັນກໍານົດໃນມື້ຖອນກ່ອນຮອດກໍານົດ.

<u>3.3 ສະກຸນເງິນທີ່ໃຊ້ໃນບັນຊີ</u>

(a) ການຖອນ ແລະ ການໂອນໃດໜຶ່ງທີ່ມີສະກຸນເງິນແຕກຕ່າງຈາກບັນຊີທີ່ກ່ຽວຂ້ອງຈະຖືກປ່ຽນເປັນສະກຸນເງິນທີ່ກ່ຽວຂ້ອງໃນອັດຕາແລກປ່ຽນໃນທ້ອງຕະຫຼາດ. ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນກັບການແລກປ່ຽນເງິນດັ່ງກ່າວຈະເປັນຄວາມຮັບຜິດຊອບຂອງລູກຄ້າ. ທະນາຄານຈະຮັບຜິດຊອບພຽງແຕ່ການຊໍາລະ ຫຼື ການໂອນເງິນທຶນໄປຫາ ຫຼື ຈາກບັນຊີໃນສະຖານທີ່ທີ່ບັນຊີດັ່ງກ່າວເປີດ ແລະ ຮັກສາໄວ້.

(b) ກ່ຽວກັບບັນຊີທີ່ເປັນເງິນຕາຕ່າງປະເທດ

(i) ທະນາຄານຈະບໍ່ຮັບຜິດຊອບໃດໆຕໍ່ການຫຼຸດມູນຄ່າຂອງເງິນທຶນຢູ່ໃນບັນຊີຍ້ອນເຫດຜົນໃດກໍຕາມ (ຊຶ່ງອາດຈະແມ່ນຍ້ອນການປ່ຽນແປງໃນອັດຕາແລກປ່ຽນ, ພາສີອາກອນ ຫຼື ຄ່າຫຼຸ້ຍຫ້ຽນ) ຫຼື ການທີ່ບໍ່ມີເງິນໃນເວລາຮອດກໍານົດເບີກຈ່າຍເນື່ອງຈາກຂໍ້ຈໍາກັດໃນການແລກປ່ຽນເງິນຕາ, ເງື່ອນໄຂພື້ນຖານ, ການໂອນແບບບໍ່ສະໝັກໃຈ, ການຄວບຄຸມດ້ານການແລກປ່ຽນເງິນຕາ ຫຼື ເຫດສຸດວິໄສໃດໜຶ່ງ.

(ii) ຖ້າຫາກປະເທດຕົ້ນກໍາເນີດຂອງສະກຸນເງິນໃດໜຶ່ງເກືອດຫ້າມຄວາມພ້ອມ, ການອອກສິນເຊື່ອ ຫຼື ການໂອນເງິນທຶນໃດໜຶ່ງໃນສະກຸນເງິນດັ່ງກ່າວ, ທະນາຄານຈະບໍ່ມີຄວາມຮັບຜິດຊອບໃດໆໃນການຈ່າຍຈາກບັນຊີໃດໜຶ່ງ, ເງິນທຶນດັ່ງກ່າວໃນສະກຸນເງິນດັ່ງກ່າວ. ທະນາຄານອາດຈະ (ແຕ່ຈະບໍ່ຈໍາເປັນຕ້ອງເຮັດ) ດໍາເນີນພັນທະຂອງຕົນກັບເງິນທຶນດັ່ງກ່າວໂດຍການຈ່າຍເງິນໃຫ້ລູກຄ້າ, ໃນເວລາໃດໜຶ່ງ (ອາດຈະເປັນກ່ອນ ຫຼື ຫຼັງວັນທີຮອດກໍານົດ), ເງິນທຶນດັ່ງກ່າວທີ່ເປັນສະກຸນເງິນອື່ນນັ້ນໃນອັດຕາແລກປ່ຽນໃດໜຶ່ງແລະດ້ວຍວິທີການໃດໜຶ່ງທີ່ທະນາຄານອາດຈະກໍານົດຕາມການພິຈາລະນາຂອງຕົນ. ລູກຄ້າຕົກລົງວ່າການຊໍາລະໃດໜຶ່ງດັ່ງກ່າວຈະຖືວ່າເປັນການດໍາເນີນພັນທະຂອງທະນາຄານດ້ວຍຄວາມເອົາໃຈໃສ່ ຖືກຕ້ອງ ແລະ ຄືນຖ້ອນໃຫ້ແກ່ລູກຄ້າຊຶ່ງພົວພັນກັບເງິນທຶນດັ່ງກ່າວ.

(iii) ໂດຍບໍ່ຂັດກັບເງື່ອນໄຂ 3.3(b)(i) ແລະ (ii) ທີ່ກ່າວມາຂ້າງເທິງນັ້ນ, ລູກຄ້າເຫັນດີວ່າເງິນຝາກທັງໝົດໃນບັນຊີທີ່ເປັນເງິນຕາຕ່າງປະເທດແມ່ນຈະໄດ້ຮັບຜົນກະທົບຈາກ

ການປ່ຽນແປງຂອງສະພາບເງື່ອນໄຂຂອງ ຕະຫຼາດຊຶ່ງເວລາຮອດກຳນົດຈະສົ່ງຜົນໃຫ້ມີ ການໄດ້ກຳໄລ ຫຼື ຂາດທຶນ ຫຼື ລາຍຮັບ ແລະ/ຫຼື ການລົງທຶນ.

(iv) ລູກຄ້າຮັບຮູ້ວ່າການເປີດບັນຊີເປັນ ເງິນຕາຕ່າງປະເທດອາດຈະຕ້ອງປະຕິບັດ ຕາມບັນດາຫຼັກການແລະເງື່ອນໄຂທີ່ ທະນາຄານອາດຈະນຳໃຊ້ເປັນແຕ່ລະໄລຍະ.

<u>3.4 ດອກເບ້ຍ</u>. ແຕ່ລະບັນຊີອາດຈະມີ ຫຼື ບໍ່ມີດອກເບ້ຍຕາມການແຈ້ງການຂອງທະນາ ຄານໃຫ້ແກ່ລູກຄ້າ. ອັດຕາດອກເບ້ຍ ຖ້າມີ ສຳລັບເງິນທີ່ມີໃນບັນຊີຈະຂຶ້ນກັບການຕົກລົງ ກັນລະຫວ່າງທະນາຄານແລະລູກຄ້າ ຫຼື, ເວລາໃດທີ່ບໍ່ສາມາດຕົກລົງກັນໄດ້ ຕາມການ ກຳນົດຂອງທະນາຄານໃນການຕາມການ ຕັດສິນຂອງທະນາຄານເອງແລະທະນາຄານ ແຈ້ງໃຫ້ລູກຄ້າຮັບຊາບເປັນແຕ່ລະໄລຍະ.

<u>3.5 ເງິນຝາກ ແລະ ການຮັບ</u>

<u>(a) ການຝາກເງິນສົດ</u>. ໂດຍພົວພັນກັບການ ຝາກເງິນສົດເຂົ້າໃນບັນຊີທະນາຄານໃດໜຶ່ງ:

(i) ເງິນຝາກດັ່ງກ່າວຈະປະຕິບັດຕາມຂອບ ເຂດທີ່ທະນາຄານກຳນົດ. ທະນາຄານຈະມີ ສິດປະຕິເສດເງິນສົດໃດໜຶ່ງທີ່ນຳມາຝາກ ຖ້າ ພາຍຫຼັງທີ່ທະນາຄານພິຈາລະນາແລ້ວມັນບໍ່ ໄດ້ຕາມເງື່ອນໄຂໃນດ້ານທີ່ມາຂອງເງິນສົດ ດັ່ງກ່າວ.

(ii) ຖ້າຫາກທະນາຄານຕົກລົງຮັບເງິນຝາກ ດັ່ງກ່າວໃນເງິນຕາທີ່ບໍ່ແມ່ນເງິນຕາທີ່ໃຊ້ ກັັນຢູ່ບ່ອນສາຂາທະນາຄານຕັ້ງຢູ່ (ສະກຸນ ເງິນຢູ່ສາຂາ), ລູກຄ້າຕົກລົງວ່າທະນາຄານ ອາດຈະແລກປ່ຽນເງິນທີ່ໄດ້ຮັບຈາກລູກຄ້າ ເປັນເງິນທີ່ໃຊ້ໃນສາຂານັ້ນຕາມອັດຕາ ແລກປ່ຽນໃນທ້ອງຕະຫຼາດ.

(iii) ລູກຄ້າຮັບຮູ້ແລະເຫັນດີວ່າໃບຝາກເງິນບໍ່ ແມ່ນໃບຮັບເງິນ ຫຼື ເອກະສານທີ່ສາມາດຢັ້ງ ຢືນທາງການ. ຖ້າມູນຄ່າທີ່ລະບຸໃນໃບຝາກ ເງິນນັ້ນແຕກຕ່າງຈາກເງິນສົດທີ່ທະນາຄານ ກວດນັບຕົວຈິງ, ຈຳນວນເງິນທີ່ທະນາຄານ ນັບຕົວຈິງຈະເປັນຈຳນວນເງິນສຸດທ້າຍແລະ ຖືກຕ້ອງ.

<u>(b) ການຝາກເງິນເປັນເຊັກ</u>. ໃນການຝາກ ເງິນທີ່ເປັນເຊັກເຂົ້າໃນບັນຊີໃດໜຶ່ງນັ້ນ:

(i) ໃນເມື່ອເຊັກ (ອາດຈະຖອນຢູ່ທີ່ທະນາ ຄານພາຍໃນ ຫຼື ທະນາຄານຕ່າງປະເທດ) ຖືກນຳມາໂອນເຂົ້າໃນບັນຊີ, ທະນາຄານຈະ ບໍ່ຮັບຜິດຊອບໂອນເງິນດັ່ງກ່າວເຂົ້າບັນຊີໂດຍ ທັນທີທັນໃດ ແລະ ອາດຈະນຳໃຊ້ເງິນ ດັ່ງກ່າວເພື່ອຈຸດປະສົງອື່ນກ່ອນ, ແລະ ບໍ່ ໂອນເຂົ້າໃນບັນຊີ, ຈົນກວ່າ ແລະ ຍົກເວັ້ນ ເຊັກດັ່ງກ່າວຜ່ານການແຈ້ງເປັນທີ່ຮຽບຮ້ອຍ ແລະ/ຫຼື ເງິນດັ່ງກ່າວໄດ້ຮັບແລະຖືກ ພິຈາລະນາວ່າເປັນເງິນທຶນທີ່ໄດ້ຮັບການແຈ້ງ ແລ້ວ.

(ii) ທະນາຄານຈະຖອນເງິນອອກຈາກບັນຊີ ຕາມປະລິມານເງິນທີ່ໂອນເຂົ້າ ບວກກັບຄ່າບໍ ການທີ່ກ່ຽວຂ້ອງ, ດອກເບ້ຍ ແລະ ເງິນເປີ ເຊັນທີ່ພົວພັນກັບວຽກດັ່ງກ່າວ, ຖ້າຫາກເຊັກ ດັ່ງກ່າວຖືກປະຕິເສດ ຫຼື ບໍ່ສາມາດຈ່າຍໃນ ພາຍຫຼັງດ້ວຍສາເຫດໃດໜຶ່ງ.

(iii) ທະນາຄານຈະມີສິດຕັດສິນຢ່າງຂາດຕົວ ໃນການຮັບ ຫຼື ປະຕິເສດເຊັກ ຫຼື ເອກະສານ ດ້ານການເງິນເພື່ອເອົາເຂົ້າເປັນເງິນຝາກ. ເຊັກທີ່ຝາກນັ້ນໄດ້ຮັບໂດຍທະນາຄານໃນນາມ ເປັນຕົວແທນໃນການເກັບຮວບຮວມເຊັກ. ທະ ນາຄານອາດຈະຕາມການຕັດສິນໃຈຂອງຕົນ ດຳເນີນການກັບເຊັກດັ່ງກ່າວເຖິງວ່າຊື່ຜູ້ໄດ້ຮັບ

ຜົນປະໂຫຍດທີ່ລະບຸໃນເຊັກນັ້ນແຕກຕ່າງຈາກຊື່ບັນຊີຂອງລູກຄ້າ. ເຊັກທີ່ຖືກປະຕິເສດອາດຈະຖືກສົ່ງໄປໃຫ້ລູກຄ້າຜ່ານໄປສະນີຕາມທີ່ຢູ່ຫຼ້າສຸດແລະຄວາມສ່ຽງ ແລະ ຄ່າໃຊ້ຈ່າຍທັງ ໝົດຈະຕົກເປັນຄວາມຮັບຜິດຊອບຂອງລູກຄ້າ.

(iv) ທະນາຄານອາດຈະຕົກລົງກັບທະນາຄານອື່ນໆທີ່ກ່ຽວຂ້ອງ ຫຼື ສູນບໍລິການເພື່ອປັບປຸງຂັ້ນຕອນແລະຕາຕະລາງທີ່ພົວພັນກັບການເກັບຮອບຮອມເຊັກທີ່ຖືກສົ່ງກັບ ຫຼື ລາຍການອື່ນໃດໜຶ່ງຕາມຂອບເຂດທີ່ກົດໝາຍອະນຸມັດ. ທະນາຄານບໍ່ຮັບຜິດຊອບຕໍ່ການກະທຳທີ່ທະນາຄານອື່ນໆດັ່ງກ່າວດຳເນີນ (ຫຼື ຕົວແທນຂອງມັນ) ຫຼື ສູນບໍການແກ້ໄຂ ຫຼື ການສູນເສຍ ຫຼື ການເປ່ເພທີ່ເກີດຂຶ້ນກັບລາຍການທີ່ມີຢູ່ໃນການຄອບຄອງຂອງທະນາຄານອື່ນໆ ຫຼື ສູນບໍລິການ ຫຼື ໃນໄລຍະການຂົນສົ່ງ. ລູກຄ້າຕົກລົງນຳໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນເພື່ອຊ່ວຍເຫຼືອທະນາຄານໃນການກຳນົດທີ່ຕັ້ງ ຫຼື ຮັບເອົາການປ່ຽນແທນລາຍການທີ່ສູນເສຍໃນຂະນະທີ່ຢູ່ໃນການຄອບຄອງຂອງທະນາຄານ.

(v) ລູກຄ້າຈະແຈ້ງຢ່າງຮີບດ່ວນໃຫ້ແກ່ທະນາຄານຖ້າຫາກພົບເຫັນເຊັກໃດໜຶ່ງ (ຈະເປັນເຊັກທີ່ປະກອບແລ້ວ ຫຼື ເຊັກເປົ່າກໍຕາມ) ສູນເສຍໄປ ຫຼື ຖືກລັກໄປ. ລູກຄ້າຈະບໍ່ນຳໃຊ້ບັນຊີໃດໜຶ່ງເພື່ອອະນຸຍາດໃຫ້ບຸກຄົນທີສາມອອກເຊັກ ຫຼື ນຳໃຊ້ບັນຊີດັ່ງກ່າວໃນທາງອື່ນຍົກເວັ້ນໄດ້ຮັບການຕົກລົງເປັນລາຍລັກອັກສອນຈາກທະນາຄານ. ທະນາຄານຈະບໍ່ຮັບຜິດຊອບຕໍ່ການເສຍຫາຍທີ່ເກີດຈາກການຈ່າຍກ່ອນກຳນົດ ຫຼື ການຍັ້ງຢືນກ່ອນກຳນົດສຳລັບເຊັກທີ່ມີການລະບຸວັນທີນຳໃຊ້. ນອກຈາກນັ້ນ, ລູກຄ້າຈະບໍ່ສອດເຂົ້າ ແລະ ທະນາຄານຈະບໍ່ຖືກຮຽກຮ້ອງໃຫ້ປະຕິບັດຕາມເງື່ອນໄຂ, ຂໍ້ຈຳກັດ ຫຼື ໝາຍເຫດໃດໜຶ່ງໃສ່ໃນເຊັກ.

(vi) ລູກຄ້າຕົກລົງວ່າທະນາຄານບໍ່ຈຳເປັນຕ້ອງອອກແຈ້ງການການປະຕິເສດ ແລະ/ຫຼື ໝາຍເຫດ ແລະ ຕ້ານກັບເຄື່ອງມືທີ່ສາມາດເຈລະຈາໄດ້ແຕ່ຖືກປະຕິເສດຊຶ່ງລູກຄ້າເປັນຝ່າຍໜຶ່ງ ແລະ ຢູ່ໃນກຳມືຂອງທະນາຄານ.

(vii) ເຊັກທີ່ຖືກສົ່ງກັບໂດຍບໍ່ທັນໄດ້ຈ່າຍຈາກທະນາຄານທີ່ເຮັດການຖອນ ຫຼື ຜູ້ຮັບຜິດຊອບຈະຖືກສົ່ງຄືນໂດຍທະນາຄານໄປຍັງລູກຄ້າພ້ອມທັງເອກະສານນຳສົ່ງກັບ. ແຕ່ ຖ້າຫາກເຊັກທີ່ສົ່ງກັບດັ່ງກ່າວຖືກລັກໄປ ຫຼື ຫາຍໄປໃນໄລຍະການສົ່ງໄປ ຫຼື ທະນາຄານຖອນ ຫຼື ຜູ້ຮັບຜິດຊອບ ເອົາໄວ້ຜິດບ່ອນ ໃນສະພາບການດັ່ງກ່າວທະນາຄານຈະບໍ່ມີພັນທະໃດໆໃນການສົ່ງເຊັກທີ່ບໍ່ທັນເບີກຈ່າຍນັ້ນໄປໃຫ້ລູກຄ້າ. ໃນເຫດການດັ່ງກ່າວ ແຈ້ງການຈາກທະນາຄານທີ່ຢືນຢັນການບໍ່ທັນໄດ້ເບີກຈ່າຍນັ້ນ ແລະ ການເສຍຫາຍຂອງເຊັກທີ່ສົ່ງກັບນັ້ນຈະເປັນການຢືນຢັນສຸດທ້າຍແລະມີຜົນສັກສິດຕໍ່ລູກຄ້າ.

(viii) ລູກຄ້າຕົກລົງ ແລະ ຢືນຢັນວ່າ ມັນຈະເປັນຄວາມຮັບຜິດຊອບຂອງລູກຄ້າໃນການແກ້ໄຂຄວາມແຕກຕ່າງໃດໜຶ່ງທີ່ອາດເກີດຈາກທະນາຄານຖອນອອກໃບຢັ້ງຢືນການໄດ້ຮັບຕົວຈິງກ່ຽວກັບລາຍການສຳລັບທະນາຄານ ຫຼື ຜູ້ຕາງໜ້າຂອງທະນາຄານອາດຈະໄດ້ຮັບການຢືນຢັນວ່າເຊັກດັ່ງກ່າວໄດ້ຖືກສົ່ງກັບໂດຍບໍ່ໄດ້ເບີກຈ່າຍ ຫຼື ອາດຈະຍັງເປັນມູນຄ່າຄ້າງຈ່າຍ.

(c) <u>ໃບຮັບເງິນ</u>. ສຳລັບເງິນທຶນທີ່ໄດ້ຮັບໂດຍທະນາຄານເພື່ອໂອນເຂົ້າບັນຊີຂອງລູກຄ້າ:

(i) ຍົກເວັ້ນທະນາຄານແຈ້ງເປັນຢ່າງອື່ນໃຫ້ແກ່ລູກຄ້າ, ທຶນດັ່ງກ່າວຈະສະໜອງເພື່ອການນຳໃຊ້ໂດຍລູກຄ້າຕາມຫຼັກການແລະນະໂຍບາຍແລະການດຳເນີນງານປົກກະຕິຂອງທະນາຄານໃນດ້ານການຮັບເອົາເງິນທຶນ.

(ii) ຍົກເວັ້ນມີການແນະນຳເປັນຢ່າງອື່ນ ໂດຍລູກຄ້າ ຫຼື ຜູ້ຈ່າຍ, ທະນາຄານອາດ ຈະເອົາເງິນທີ່ໄດ້ຮັບນັ້ນເຂົ້າຝາກໃນບັນຊີ ໃດໜຶ່ງຂອງລູກຄ້າ. ຖ້າຫາກທຶນໃດໜຶ່ງ ເປັນເງິນຕາທີ່ລູກຄ້າບໍ່ມີໃນບັນຊີ ທະນາຄານອາດຈະຕັດສິນດັ່ງຕໍ່ໄປນີ້ (ກ) ເປີດບັນຊີໃໝ່ເປັນເງິນຕາທີ່ທະນາຄານໄດ້ ຮັບເພື່ອໂອນເງິນດັ່ງກ່າວເຂົ້າໄປ ຫຼື (ຂ) ແຕກເງິນດັ່ງກ່າວເປັນເງິນທີ່ຢູ່ໃນບັນຊີ ຂອງລູກຄ້າຕາມອັດຕາແລກປ່ຽນທ້ອງ ຕະຫຼາດ.

(iii) ລູກຄ້າອອກຄຳສັ່ງໃຫ້ທະນາຄານ ໂອນເງິນເຂົ້າໃນບັນຊີໃດໜຶ່ງແລະທຶນທີ່ ທະນາຄານໄດ້ຮັບນັ້ນເປັນເງິນຕາທີ່ແຕກ ຕ່າງຈາກເງິນຢູ່ໃນບັນຊີ ທະນາຄານຈະ ແຕກເປັນເງິນທີ່ຢູ່ໃນບັນຊີຕາມອັດຕາ ແລກປ່ຽນໃນທ້ອງຕະຫຼາດ.

(iv) ໃນເມື່ອທຶນທີ່ໂອນເຂົ້າໃນບັນຊີໂດຍຄາດຄະ ເນວ່າຈະໄດ້ຮັບທຶນຈາກທະນາຄານແຕ່ວ່າທະນາ ຄານບໍ່ໄດ້ຮັບທຶນດັ່ງກ່າວ ຫຼື ຖືກໂອນເຂົ້າໃນບັນຊີ ທີ່ບໍ່ຖືກ ຫຼື ຍ້ອນການຕົວະຍົວະ, ຫຼື ຖ້າຫາກວ່າ ທະນາຄານຮັບຜິດຊອບທຶນທີ່ໂອນກັບໂດຍການ ໂອນເຂົ້າໃນບັນຊີ ຫຼື ບໍ່ສາມາດໄດ້ຮັບທຶນ ເພື່ອຈຸດປະສົງດຳເນີນທຸລະກຳການໂອນເຂົ້າບັນຊີ ສຳລັບການໂອນເຂົ້າບັນຊີຂອງລູກຄ້າ ແລະ ທະນາຄານໄດ້ພິຈາລະນາເຖິງເຫດຜົນພຽງພໍ ທະນາຄານຈະມີເຫດຜົນພຽງພໍໃນການເຮັດເຊັ່ນນັ້ນ ທະນາຄານຈະມີສິດຫັກເງິນຈາກບັນຊີໃດໜຶ່ງຕາມ ປະລິມານເງິນທີ່ໄດ້ໂອນເຂົ້າໄປ (ບ່ອນທີ່ເປັນໄປ ໄດ້ສາມາດແຕກເປັນເງິນຕາທີ່ຕ້ອງການໃຊ້ ໃນ ອັດຕາແລກປ່ຽນຕະຫຼາດ) ລວມທັງຄ່າໃຊ້ຈ່າຍ ຕ່າງໆ, ດອກເບ້ຍ ແລະ ເງິນເປີເຊັນທີ່ກ່ຽວຂ້ອງ.

3.6 ການຖອນ ແລະ ການຊຳລະ

(a) ການຖອນແລະການຊຳລະ. ກ່ຽວຂ້ອງກັບການ ຖອນຈາກບັນຊີ ຫຼື ຄຳສັ່ງໃຫ້ຊຳລະຂອງລູກຄ້າ:

(i) ທະນາຄານຈະໂດຍປະຕິບັດຕາມຂອບເຂດທີ່ ໄດ້ຕົກລົງຫຼືສ້າງຂຶ້ນໂດຍທະນາຄານອະນຸຍາດໃຫ້ມີ ການຖອນເງິນອອກຈາກບັນຊີດັ່ງກ່າວ:

(A) ຖ້າຫາກລູກຄ້າມີທຶນທີ່ແຈ້ງແລ້ວຢູ່ໃນບັນຊີ ດັ່ງກ່າວຢ່າງໜ້ອຍເທົ່າກັບມູນຄ່າທີ່ຕ້ອງການຖອນ.

(B) ຖ້າຫາກການຖອນ ລວມທັງຄຳສັ່ງໃດໜຶ່ງເຮັດ ສຳເລັດຕາມສັນຍາສະບັບນີ້, ແລະ

(C) ເຄື່ອງມືທີ່ກ່ຽວຂ້ອງທີ່ນຳສະເໜີໃຫ້ທະນາຄານ ຖືກສ້າງຂຶ້ນມາ, ປະກາດນຳໃຊ້ ຫຼື ສາມາດຊຳລະ ເປັນເງິນສົດ, ອອກໃຫ້ ຫຼື ເປັນຄຳສັ່ງຂອງຜູ້ລົງ ລາຍເຊັນ ຫຼື ບຸກຄົນອື່ນທີ່ໄດ້ຮັບການມອບໝາຍ.

(ii) ທະນາຄານອາດຈະຕັດສິນໃຈດ້ວຍຕົນເອງເພື່ອ ອະນຸຍາດການຖອນທຶນທີ່ບໍ່ແມ່ນກອງທຶນທີ່ໄດ້ແຈ້ງ ແລ້ວ. ຖ້າຫາກວ່າກອງທຶນດັ່ງກ່າວຖືກປີ້ນກັບ ຫຼື ຖືກປະຕິເສດ, ທະນາຄານອາດຈະນຳໃຊ້ມາດຕະ ການຕ້ານກັບລູກຄ້າ ແລະ ລູກຄ້າຈະຮັບ ຜິດຊອບ ຕໍ່ມູນຄ່າຂອງການຖອນໃດໜຶ່ງທີ່ກ່ຽວຂ້ອງອອກ ຈາກບັນຊີດັ່ງກ່າວ.

(iii) ຖ້າຫາກບໍ່ສາມາດປະຕິບັດໄດ້ສຳລັບ ທະນາຄານໃນການສະໜັບສະໜູນວິທີການຖອນ ເງິນທີ່ລູກຄ້າສະເໜີມາ, ທະນາຄານອາດຈະ ສະໜັບສະໜູນຄຳສະເໜີຂໍຖອນເງິນໃດໜຶ່ງດ້ວຍ ຕອບສະໜອງເຊັກທະນາຄານສຳລັບເຮັດໃຫ້ ສາມາດດຳເນີນການຊຳລະ.

(iv) ທະນາຄານຈະດຳເນີນການກັບຄຳສັ່ງໃດໜຶ່ງ ໃນວັນທີຊຳລະທີ່ລູກຄ້າກຳນົດ, ໃນເງື່ອນໄຂທີ່ວ່າ ຄຳສັ່ງດັ່ງກ່າວມາຮອດທະນາຄານກ່ອນເວລາປິດ ບັນຊີ, ການຊຳລະແມ່ນຢູ່ໃນຂອບເຂດການດຳເນີນ ການໃດໜຶ່ງທີ່ທະນາຄານກຳນົດ ຫຼື ເພດານ ຫຼື ຂອບເຂດສິດທີ່ລູກຄ້າກຳນົດ (ຖ້າຈຳເປັນສາມາດ ແຕກເປັນສະກຸນເງິນທີ່ກ່ຽວຂ້ອງໃນອັດຕາທີ່

ຕະຫຼາດກຳນົດ) ແລະ ບັນຊີມີທຶນແຈ້ງແລ້ວພຽງພໍ ຫຼື ມີການຈັດວາງດ້ານສິນເຊື່ອທີ່ເຮັດໃຫ້ສາມາດດຳເນີນການຊຳລະທີ່ໄດ້ກຳນົດໄວ້ໃນຄຳສັ່ງ.

(v) ຖ້າຫາກຄຳສັ່ງໄດ້ຮັບໃນວັນທີ ຫຼື ກຳນົດວັນທີຊຳລະທີ່ຖືກມື້ພັກລັດຖະການ, ການຊຳລະຈະຕ້ອງເຮັດໃນມື້ລັດຖະການຖັດໄປ, ຍົກເວັ້ນໃນກໍລະນີທີ່ໄດ້ຕົກລົງກັນລະຫວ່າງທະນາຄານ ແລະ ລູກຄ້າ.

(vi) ພາຍຫຼັງໄດ້ຮັບຄຳສັ່ງ ທະນາຄານໄດ້ຮັບສິດຫັກເງິນຈາກບັນຊີໃດໜຶ່ງໃນມູນຄ່າທີ່ພຽງພໍສຳລັບການຊຳລະແລະຫັກເອົາຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ ແລະ ລາຍຈ່າຍອື່ນໆທີ່ກ່ຽວຂ້ອງ.

(vii) ຍົກເວັ້ນມີການກຳນົດໂດຍລູກຄ້າໃນຄຳສັ່ງໃດໜຶ່ງ, ທະນາຄານອາດຈະກຳນົດລຳດັບທີ່ເປັນບຸລິມະສິດກ່ຽວກັບການຊຳລະໃນຄຳສັ່ງໃດໜຶ່ງ.

(viii) ໂດຍບໍ່ຂັດກັບຄຳສັ່ງໃດໜຶ່ງຂອງລູກຄ້າໃນທາງກົງກັນຂ້າມ, ທະນາຄານສະຫງວນສິດໃນການນຳໃຊ້ລະບົບບຸກຄົນທີສາມແລະບຸກຄົນທີສາມໃນການຈັດຕັ້ງປະຕິບັດຄຳສັ່ງໃນການໂອນທຶນແລະອາດຈະນຳໃຊ້ວິທີການອື່ນໃນການດຳເນີນຕາມຄຳສັ່ງການໂອນທຶນທີ່ທະນາຄານອາດຈະເຫັນວ່າສົມເຫດສົມຜົນໃນສະຖານະການດັ່ງກ່າວ.

(ix) ກ່ຽວກັບການຊຳລະລະດັບສາກົນ:

(A) ລູກຄ້າແຕ່ງຕັ້ງທະນາຄານເປັນຕົວແທນຂອງຕົນໃນການສົ່ງຄຳສັ່ງໄປຫາຜູ້ຮັບເພື່ອເຮັດການຊຳລະໃນປະເທດອື່ນ.

(B) ລູກຄ້າຮັບຮູ້ແລະຕົກລົງວ່າຜູ້ຮັບອາດຈະເກັບເງິນເປີເຊັນ, ຄ່າທຳນຽມ ຫຼື ຄ່າບໍລິການໃນການດຳເນີນການຊຳລະຕ່າງປະເທດເຂົ້າໃນບັນຊີຜູ້ຮັບຊຳລະ. ທະນາຄານບໍ່ມີຄວາມສາມາດຄວບຄຸມຄ່າເປີເຊັນ, ຄ່າບໍລິການ ຫຼື ຄ່າທຳນຽມຕ່າງໆ ຊຶ່ງຈະລວມເອົາ (1) ການໄດ້ຮັບການຊຳລະໂດຍຜູ້ຮັບຊຳລະແຍກກັນ ຫຼື ຫັກອອກໂດຍຜູ້ຮັບຈາກກອງທຶນທີ່ໄດ້ຊຳລະໃນບັນຊີຂອງຜູ້ຮັບເງິນ. ໃນເມື່ອການຫັກດັ່ງກ່າວແມ່ນຜູ້ຮັບຄຳສັ່ງໃຫ້ຊຳລະ, ຜູ້ຮັບຊຳລະຈະຮັບເງິນໜ້ອຍກວ່າມູນຄ່າທີ່ກຳນົດໃນຄຳສັ່ງ; ຫຼື (2) ຈ່າຍໂດຍລູກຄ້າໃຫ້ທະນາຄານຕາມແຜນກຳນົດຄ່າທຳນຽມ.

(C) ຜູ້ຮັບຄຳສັ່ງໃຫ້ຊຳລະອາດຈະແຕກເງິນທີ່ຕ້ອງຊຳລະເປັນເງິນຕາທີ່ຕົນຕ້ອງການກ່ອນດຳເນີນການຊຳລະ ແລະ

(D)ທະນາຄານອາດຈະຮັບການຊຳລະເງິນເປີເຊັນຈາກ ຫຼື ເຂົ້າໃນການຈັດວາງການໃຊ້ລາຍຮັບ ຫຼື ເງິນເປີເຊັນຮ່ວມກັນກັບຜູ້ຮັບຄຳສັ່ງໃຫ້ຊຳລະ, ມູນຄ່າດັ່ງກ່າວຈະຂຶ້ນກັບຫຼາຍປັດໄຈ ລວມທັງປະລິມານທຸລະກິດລະຫວ່າງທະນາຄານແລະຜູ້ຮັບຄຳສັ່ງໃຫ້ຊຳລະ.

(x) ກ່ຽວຂ້ອງກັບຄຳສັ່ງການໂອນເງິນທຶນ, ທະນາຄານ ແລະ ບຸກຄົນທີສາມອາດຈະນຳໃຊ້ເລກກຳນົດຜູ້ຮັບຜົນປະໂຫຍດ, ທະນາຄານຂອງຜູ້ຮັບຜົນປະໂຫຍດ ຫຼື ບຸກຄົນທີສາມໃດໜຶ່ງລວມເຂົ້າໃນຄຳສັ່ງການໂອນເງິນ. ນອກຈາກນັ້ນລູກຄ້າຍັງຮັບຮູ້ວ່າທະນາຄານຂອງຜູ້ໄດ້ຮັບຜົນປະໂຫຍດອາດຈະເຮັດການຊຳລະຕາມເລກກຳນົດເຖິງແມ່ນວ່າມັນກຳ ນົດບຸກຄົນທີ່ແຕກຕ່າງຈາກຜູ້ທີ່ໄດ້ຮັບຜົນປະໂຫຍດ ທີ່ກຳນົດຊື່ມານັ້ນ, ຍັງຕົກລົງວ່າລູກຄ້າຈະຮັບຜິດ ຊອບຕໍ່ຜົນສະທ້ອນຂອງການແຕກຕ່າງກັນລະ ຫວ່າງຊື່ແລະເລກລະຫັດຂອງຝ່າຍໃດໜຶ່ງໃນຄຳສັ່ງການໂອນເງິນດັ່ງກ່າວ.

(xi) ລູກຄ້າປະກາດແລະປະຕິຍານຕໍ່ທະນາຄານວ່າການຊຳລະໃດໜຶ່ງທີ່ທະນາຄານດຳເນີນຕາມຄຳສັ່ງໃດໜຶ່ງຈະບໍ່ລະເມີດກົດໝາຍ, ລະບຽບການລົງໂທດ ຫຼື ເງື່ອນໄຂຂອງອົງການຈັດຕັ້ງທີ່ມີອຳນາດເຕັມ ຫຼື ເງື່ອນໄຂໃດໜຶ່ງຂອງສັນຍາສະບັບນີ້, ແລະ ລູກຄ້າຈະບໍ່ເຮັດ ຫຼື ອະນຸຍາດໃຫ້ມີການຊຳລະສຳລັບຈຸດປະສົງທີ່ຜິດກົດໝາຍ ຫຼື ເປັນການສໍ້ໂກງ.

(b) ການບໍລິການເຊັກ. ໃນເມື່ອທະນາຄານເຫັນດີສະໜອງໃຫ້ລູກຄ້າການບໍລິການເຊັກທີ່ກ່ຽວຂ້ອງກັບບັນຊີ:

(i) ທະນາຄານຈະສະໜອງເຊັກໃຫ້ລູກຄ້າຕາມການສະເໜີຂອງລູກຄ້າ. ລູກຄ້າຈະແຈ້ງໃຫ້ທະນາຄານໄວເທົ່າທີ່ຈະໄວໄດ້ຖ້າເຊັກທີ່ບໍ່ໄດ້ໃຊ້ເສຍ ຫຼື ມີການລັກໄປ ແລະ ຈະທຳລາຍ ຫຼື ສົ່ງໃຫ້ທະນາຄານເຊັກທີ່ບໍ່ໄດ້ໃຊ້ ແລະ ບັນດາເອກະສານທີ່ກ່ຽວຂ້ອງພາຍຫຼັງການຍົກເລີກບັນຊີ. ລູກຄ້າຮັບຮູ້ວ່າຖ້າຫາກບຸກຄົນທີສາມໃດໜຶ່ງກາຍເປັນຜູ້ຖືເຊັກ ມັນອາດມີສິດໃນການສັ່ງໃຫ້ທະນາຄານຊຳລະ.

(ii) ຖ້າຫາກລູກຄ້າສະເໜີໃຫ້ທະນາຄານຢຸດ ຫຼື ຍົກເລີກຄຳສັ່ງ:

(A) ທະນາຄານອາດຈະ (1) ຕັດສິນວ່າຈະຢຸດ ຫຼື ຍົກເລີກຄຳສັ່ງນັ້ນ ຫຼື (2) ຖ້າຫາກທະນາຄານສາມາດກຳນົດການຊຳລະດັ່ງກ່າວແລະດຳເນີນວ່າຄຳສັ່ງດັ່ງກ່າວນັ້ນຍັງບໍ່ທັນສົມບູນ ທະນາຄານຈະນຳໃຊ້ຄວາມພະຍາຍາມຂອງຕົນເພື່ອຢຸດ ຫຼື ຍົກເລີກ, ເທົ່າທີ່ເຮັດໄດ້, ຄຳສັ່ງດັ່ງກ່າວ ແລະ ຈະຫັກຄ່າທຳນຽມຕ່າງໆໃນການດຳເນີນການກັບບັນຊີລູກຄ້າແລະຖ້າຫາກເຄື່ອງມືທະນາຄານດັ່ງກ່າວແມ່ນເຊັນທະນາຄານ ແລະ ທະນາຄານຢຸດ ຫຼື ຍົກເລີກເຊັກທະນາຄານດັ່ງກ່າວມັນຈະສົ່ງເງິນເຂົ້າໃນເຊັກທະນາຄານດັ່ງກ່າວແລະໂອນເຂົ້າໃນບັນຊີລູກຄ້າທີ່ກຳນົດໄວ້.

(B) ຖ້າຫາກທະນາຄານໄດ້ເຮັດ ຫຼື ເລືອກທີ່ຈະຈ່າຍຕາມຄຳສັ່ງໃດໜຶ່ງໂດຍບໍ່ຂັດກັບການສະເໜີຈາກລູກຄ້າ ເພື່ອຢຸດ ຫຼື ຍົກເລີກເຄື່ອງມືດັ່ງກ່າວ (ເຊື່ອອາດຈະແມ່ນຍ້ອນການເສຍ, ຖືກລັກ ຫຼື ຍ້ອນສາເຫດອື່ນໆ), ລູກຄ້າຈະຮັບຜິດຊອບ ແລະ ອະນຸຍາດໃຫ້ທະນາຄານຫັກເອົາເງິນຈາກບັນຊີລູກຄ້າທີ່ກຳນົດຕາມຈຳນວນທີ່ໄດ້ສົ່ງເຂົ້າໄປໃຫ້ລູກຄ້າ.

(C) ລູກຄ້າຈະແຈ້ງໃຫ້ທະນາຄານຮູ້ໂດຍໄວເພື່ອຍົກເລີກການສະເໜີດັ່ງກ່າວ ຖ້າຫາກວ່າ ແລະໃນເມື່ອສາເຫດໃນການສະເໜີນັ້ນໝົດລົງ.

(D) ຍົກເວັ້ນລູກຄ້າຍົກເລີກການສະເໜີນັ້ນເປັນລາຍລັກອັກສອນໄປຍັງທະນາຄານ, ການສະເໜີໃດໜຶ່ງດັ່ງກ່າວຈະໝົດກຳນົດນຳໃຊ້ ແລະ ຈະບໍ່ມີຜົນບັງຄັບໃຊ້ກັບສິ່ງທີ່ເກີດຂຶ້ນກ່ອນ (1) ການຊຳລະ ຫຼື ການຍົກເລີກເຄື່ອງມືດັ່ງກ່າວ (2) ການປິດບັນຊີໃນມື້ທີ່ເຄື່ອງມືຖືກຖອນ (3) ວັນທີທີ່ຮອດກຳນົດຫົກສິບມື້ພາຍຫຼັງການໂອນບັນຊີໃນມື້ທີ່ເຄື່ອງມືນັ້ນຖືກສ້າງຂຶ້ນໄປຍັງສາຂາອື່ນຂອງທະນາຄານ ແລະ (4) ວັນທີທີ່ຮອດກຳນົດຫົກເດືອນຈາກວັນທີທີ່ຄຳສະເໜີດັ່ງກ່າວຖືກສ້າງຂຶ້ນ.

(iii) ຖ້າຫາກທະນາຄານຕົກລົງອອກໜັງສືຮຽກຮ້ອງຕາງລູກຄ້າແລະສະກຸນເງິນຂອງເອກະສານຮຽກ ຮ້ອງນັ້ນແຕກຕ່າງກັນສະກຸນເງິນຂອງບັນຊີທີ່ກ່ຽວ ຂ້ອງຈະຖືກກຳນົດໂດຍການແລກປ່ຽນໃບຮຽກຮ້ອງດັ່ງກ່າວເປັນສະກຸນເງິນທີ່ກ່ຽວຂ້ອງຕາມອັດຕາແລກ ປ່ຽນໃນທ້ອງຕະຫຼາດ. ຄ່າທຳນຽມທີ່ເກີດຂຶ້ນກັບການອອກໃບຮຽກຮ້ອງດັ່ງກ່າວ ຫຼື ການແລກປ່ຽນເງິນນັ້ນຈະເຮັດສຳລັບບັນຊີຂອງລູກຄ້າ., ແລະ

(iv) ລູກຄ້າຮັບຮູ້ວ່າການບໍລິການເຊັກໃດໜຶ່ງແມ່ນມີຂໍ້ຈຳກັດດ້ານມູນຄ່າ ຫຼື ຂອບເຂດອຳນາດທີ່ລູກຄ້າກຳນົດ (ໃນ

ເວລາທີ່ຈຳເປັນ ໃຫ້ແລກປ່ຽນເປັນເງິນຕາທີ່ກ່ຽວຂ້ອງໂດຍນຳໃຊ້ອັດຕາແລກປ່ຽນຕະຫຼາດ).

(c) ການບໍລິການຫັກເງິນໂດຍກົງ. ໃນເມື່ອທະນາຄານຕົກລົງສະໜອງໃຫ້ລູກຄ້າການບໍລິການຫັກເງິນໂດຍກົງ:

(i) ການບໍລິການຫັກເງິນໂດຍກົງຈະຖືກສະໜອງໃຫ້ຕາມບົດບາດການຫັກເງິນໂດຍກົງ ທີ່ໄດ້ຮັບແລະຖືກຮັບເອົາຈາກທະນາຄານ, ແລະ

(ii) ລູກຄ້າຮັບຮູ້ແລະຕົກລົງວ່າ:

(A)ທະນາຄານໄດ້ຮັບສິດໃນການຫັກຈາກບັນຊີທີ່ກ່ຽວຂ້ອງ ແລະ ດຳເນີນການຊຳລະຕາມບົດບາດການຫັກເງິນໂດຍກົງແຕ່ຂຶ້ນກັບປະລິມານເງິນທີ່ແຈ້ງແລ້ວທີ່ມີໃນບັນຊີດັ່ງກ່າວ.

(B) ຂໍ້ມູນຂ່າວສານທີ່ປະກອບໃຫ້ໂດຍລູກຄ້າໃນບົດບາດການຫັກເງິນໂດຍກົງແມ່ນເປັນຄວາມຮັບຜິດຊອບຂອງລູກຄ້າພຽງຜູ້ດຽວ ແລະ ທະນາຄານມີສິດອີງໃສ່ຂໍ້ມູນດັ່ງກ່າວໂດຍບໍ່ເຮັດການຢືນຢັນໃດໆທັງສິ້ນ.

(C) ທະນາຄານຈະບໍ່ຮັບຜິດຊອບການສູນເສຍໃດໆທີ່ເກີດຂຶ້ນ ຫຼື ມີຜົນກະທົບໃສ່ລູກຄ້າທີ່ເກີດຈາກການທີ່ລູກຄ້າບໍ່ສາມາດປະຕິບັດພັນທະຂອງຕົນ ຫຼື ເປັນຜົນຈາກທະນາຄານບໍ່ດຳເນີນການແລກປ່ຽນຊື້ຂາຍທີ່ພົວພັນກັບບົດບາດການຫັກໂດຍກົງຍ້ອນເຫດຜົນໃດໜຶ່ງ (ທີ່ບໍ່ແມ່ນຜົນຂອງການປະໝາດເລີ້ນເລີ້, ການເຮັດຜິດໂດຍເຈຕະນາ ຫຼື ການປອມແປງ) ລວມທັງແຕ່ບໍ່ຈຳກັດ ໃນເຫດການທີ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນຖືກສະໜອງໃຫ້ຈາກລູກຄ້າ, ບໍ່ມີເງິນພຽງພໍໃນບັນຊີ, ບັນຊີຖືກຍົກເລີກ ຫຼື ຖືກໂຈະ ຫຼື ບົດບາດການຫັກເງິນໂດຍກົງໃຊ້ບໍ່ໄດ້ອີກຕໍ່ໄປ.

(d) ການບໍລິການໃຫ້ຄຳປຶກສາແກ່ຜູ້ໄດ້ຮັບຜົນປະໂຫຍດ. ໃນເມື່ອທະນາຄານຕົກລົງສະໜອງໃຫ່ແກ່ລູກຄ້າການບໍລິການໃຫ້ຄຳປຶກສາແກ່ຜູ້ໄດ້ຮັບຜົນປະໂຫຍດ:

(i) ທະນາຄານຈະ (ກ) ສົ່ງຂໍ້ມູນຂ່າວສານທີ່ສະໜອງໃນການດຳເນີນເຄື່ອງມືການຊຳລະຂອງລູກຄ້າໃນນາມເປັນຕົວແທນສຳລັບລູກຄ້າ ແລະ (ຂ) ນຳໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນໃນການເຮັດໃຫ້ສຳເລັດການໂອນຄຳປຶກສາດ້ານໂອນເງິນ ດັ່ງກ່າວຕາມການຊີ້ນຳ (ລວມທັງດ້ວຍວິທີການໂອນທາງເອເລັກໂຕຣນິກ ເຊັ່ນ ອີເມລ໌ ຫຼື ໃນຮູບແບບຂອງການແນະນຳທາງເອກະສານທີ່ພິມອອກມາ) ແລະ

(ii) ທະນາຄານບໍ່ຮັບພັນທະໃດໆຕໍ່ກັນທີ່ບໍ່ສາມາດໂອນຄຳແນະນຳການໂອນເງິນໄປຍັງຜູ້ຮັບເງິນໃນເມື່ອມັນໄດ້ປະຕິບັດຕາມເງື່ອນໄຂ 3.6(d)(i)(B) ຂ້າງເທິງ ຫຼື ເນື້ອໃນ ຫຼື ຄວາມຖືກຕ້ອງຂອງບັນຫາທີ່ລູກຄ້າຊີ້ນຳທະນາຄານໃຫ້ລວມເຂົ້າໃນຄຳແນະນຳການໂອນເງິນ.

<u>3.7 ການບໍລິການສະວີບ</u>. ໃນເມື່ອທະນາຄານຕົກລົງສະໜອງໃຫ້ລູກຄ້າການບໍລິການສະວີບ:

(a) ໂດຍປະຕິບັດຕາມບັນດາປັດໃຈຕ່າງໆຂອງການບໍລິການສະວີບ ດັ່ງທີ່ຕົກລົງກັນດ້ານເວລາປິດ ແລະ ໃນຄວາມຖີ່ທີ່ຕົກລົງກັນ, ທະນາຄານຈະຈັດຫາການໂອນເງິນລະຫວ່າງບັນຊີທີ່ເຂົ້າຮ່ວມແລະບັນຊີແມ່.

(b) ຖ້າຫາກບັນຊີປະຕິບັດຕາມການບໍລິການສະ

ວິບບໍ່ໄດ້ຢູ່ໃນສະກຸນເງິນອັນດຽວກັນ, ອັດຕາແລກປ່ຽນທີ່ກ່ຽວຂ້ອງຈະຖືກນຳໃຊ້ເພື່ອແລກປ່ຽນເງິນໃຫ້ເປັນເງິນສະກຸນດຽວ.

(c) ຖ້າຫາກທະນາຄານໄດ້ຮັບການແນະນຳລ່ວງໜ້າກ່ຽວກັບການໂອນເຂົ້າ ຫຼື ຫັກອອກຈາກບັນຊີ, ໂດຍບໍ່ຄຳນຶງວ່າຄຳແນະນຳລ່ວງໜ້າດັ່ງກ່າວໃນທີ່ສຸດຍັງຢືນວ່າຖືກຕ້ອງ, ທະນາຄານອາດຈະແຕ່ຕ້ອງການບໍ່ຄາດເດົາການແລກປ່ຽນຕາມການແນະນຳລ່ວງໜ້າໃນການຄິດໄລ່ທຶນທີ່ຕ້ອງໄດ້ໂອນຕາມການບໍລິການສະວີບໂດຍບໍ່ມີພັນທະໜີ້ສິນ. ການຫັກເງິນໃນບັນຊີທີ່ໄດ້ຮັບຜົນກະທົບຕໍ່ເວລາປິດບັນຊີທີ່ກ່ຽວຂ້ອງອາດຈະສົ່ງຜົນໃຫ້ມີການເບີກເງິນເກີນບັນຊີໃນເວລາທ້າຍມື້ໃນບັນຊີດັ່ງກ່າວ, ແລະ ລູກຄ້າຈະຮັບຜິດຊອບໃນການຊຳລະຄືນການເບີກເກີນບັນຊີດັ່ງກ່າວພ້ອມກັບດອກເບ້ຍ. ການໂອນເງິນເຂົ້າບັນຊີທີ່ໄດ້ຮັບຜົນສະທ້ອນໃນເວລາປິດບັນຊີໃນແຕ່ລະວັນອາດຈະສົ່ງຜົນໃຫ້ທຶນທີ່ຮັກສາໄວ້ໃນບັນຊີນັ້ນໃນຕອນທ້າຍຂອງແຕ່ລະມື້.

(d) ຈະບໍ່ມີການໂອນຕາມການບໍລິການສະວີບຖ້າຫາກວ່າບໍ່ແມ່ນວັນລັດຖະການ.

<u>3.8 ເບີກເກີນບັນຊີ</u>. ຍົກເວັ້ນທະນາຄານໄດ້ຕົກລົງເປັນລາຍລັກອັກສອນເພື່ອສະໜອງສິ່ງອຳນວຍຄວາມສະດວກການເບີກເກີນບັນຊີ ລູກຄ້າຈະຮັກສາທຸກໆບັນຊີເປັນສິນເຊື່ອ. ໃນເຫດການທີ່ມີຄຳສັ່ງທີ່ພົວພັນກັບ ຫຼື ການແລກປ່ຽນຊື້ຂາຍໃນ, ບັນຊີອາດຈະເບີກເກີນບັນຊີ ຫຼື ເກີນຂອບເຂດການເບີກເກີນບັນຊີທີ່ຕົກລົງກັນ, ທະນາຄານບໍ່ມີພັນທະໃນການ (ແຕ່ອາດຈະຖ້າຫາກຕັດສິນໃຈດ້ວຍຕົນເອງ) ໃນການສ້າງໃຫ້ມີຄຳສັ່ງ ຫຼື ການແລກປ່ຽນຊື້ຂາຍ. ລູກຄ້າຈະໂດຍທັນທີຈະຈ່າຍທຶນພຽງພໍເຂົ້າໃນບັນຊີທີ່ກ່ຽວຂ້ອງເພື່ອຫັດແທນມູນຄ່າທີ່ເບີກເກີນກາຍເປັນເລກສູນ ຫຼື ຖ້າຫາກກ່ຽວຂ້ອງ, ຂອບເຂດການເບີກເກີນບັນຊີໃດໜຶ່ງທີ່ໄດ້ຕົກລົງກັນລະຫວ່າງທະນາຄານແລະລູກຄ້າ. ລູກຄ້າຮັບຮູ້ວ່າທະນາຄານຈະເກັບດອກເບ້ຍຕໍ່ມູນຄ່າໃດໜຶ່ງທີ່ເປັນໜີ້ສິນ, ລວມທັງມູນຄ່າເບີກເກີນບັນຊີ ຫຼື ການເບີກເກີນບັນຊີ, ໃນອັດຕາທີ່ທະນາຄານກຳນົດໃຫ້ລູກຄ້າ ທີ່ຈະໄລ່ເປັນລາຍວັນ.ໂດຍບໍ່ຂັດກັບສິ່ງທີ່ກ່າວມາຂ້າງເທິງບັນຊີການເບີກເກີນບັນຊີໃດໜຶ່ງອາດຈະຖືກຕໍ່ອາຍຸໂດຍທະນາຄານຕາມການພິຈາລະນາຂອງທະນາຄານພຽງຝ່າຍດຽວ ແລະ ປະຕິບັດຕາມຫຼັກການແລະເງື່ອນໄຂທີ່ອາດຈະຕົກລົງກັນລະຫວ່າງທະນາຄານແລະລູກຄ້າ.

<u>4. ການແຈ້ງຜົນບັນຊີ, ຄຳແນະນຳຢືນຢັນ ແລະ ການບໍລິການການລາຍງານ</u>

<u>4.1 ລາຍງານຜົນບັນຊີແລະຄຳແນະນຳ</u>. ການລາຍງານຜົນບັນຊີ ຫຼື ຄຳແນະນຳ (ຈະເປັນແບບເອກະ ສານຫຼືສົ່ງຜ່ານຊ່ອງທາງອື່ນໃດໜຶ່ງ) ອາດຈະຖືກສະໜອງໃຫ້ກັບລູກຄ້າ (ຕາມການຕົກລົງກັບລູກຄ້າ) ຫຼື ໃຫ້ລູກຄ້າສາມາດເຂົ້ານຳໃຊ້ໄດ້ໃນແຕ່ລະເດືອນ ຫຼື ທຸກໆຂອງເດືອນຊຶ່ງທະນາຄານອາດຈະຕົກລົງກັບລູກຄ້າ.

<u>4.2 ຄວາມແຕກຕ່າງ</u>. ລູກຄ້າຈະຢັ້ງຢືນຄວາມຖືກຕ້ອງຂອງລາຍງານການບັນຊີທຸກໆຄັ້ງ ຫຼື ຄຳແນະນຳທີ່ໄດຮັບຈາກທະນາຄານ ແລະ, ຍົກເວັ້ນໃນກໍລະນີທີ່ລູກຄ້າແຈ້ງໃຫ້ທະນາຄານເປັນລາຍລັກອັກສອນພາຍໃນ 15 ມື້ນັບຈາກວັນທີທີ່ໃບແຈ້ງສະຖານະພາບ ຫຼື ການຢືນຢັນກ່ຽວກັບຂໍ້ຜິດພາດ, ການຜິດກົດລະບຽບ ຫຼື ການບໍ່ປະຕິບັດ, ຄວາມບໍ່ຊັດເຈນໃນການເຂົ້າເອກະສານເຊັ່ນບັນດາອົງການທີ່ເຫັນວ່າມີຂໍ້ມູນເພື່ອດຳເນີນການ.

<u>4.3 ການແປງຂໍ້ຜິດພາດ ຫຼື ການບໍ່ປະຕິບັດ</u>. ໂດຍບໍ່ຂັດກັບເງື່ອນໄຂ 4.2 ຂ້າງເທິງ, ທະນາຄານ ອາດຈະໃນເວລາໃດໜຶ່ງແກ້ໄຂຂໍ້ຜິດພາດ ຫຼື ເອົາສິ່ງທີ່ບໍ່ໄດ້ໃສ່ເຂົ້າມາໃນເອກະສານ ຫຼື ຄຳ

ແນະນຳດ້ານການຢືນຢັນທີ່ພາຍຫຼັງໄດ້ດັດແກ້ແລ້ວຈະຖືວ່າເປັນຂໍ້ບັງຄັບນຳໃຊ້ກັບລູກຄ້າ. ທະນາຄານມີສິດຈະຮຽກຮ້ອງໃຫ້ມີການສົ່ງເງິນຄືນ ແລະ/ຫຼືຫັກບັນຊີໃດໜຶ່ງສຳລັບຄ່າທີ່ໄດ້ຊຳລະເກີນທີ່ເກີດຈາກຂໍ້ຜິດພາດ ຫຼື ການຫຼົງລືມດັ່ງກ່າວ.

4.4 ການບໍລິການດ້ານການລາຍງານ. ໃນເມື່ອທະນາຄານຕົກລົງສະໜອງໃຫ້ລູກຄ້າການບໍລິການກ່ຽວກັບການລາຍງານ:

(a) ລູກຄ້າອະນຸຍາດໃຫ້ທະນາຄານສົ່ງແລະເປີດເຜີຍໃຫ້ ແລະ ຮັບຈາກ (ຜ່ານຂໍ້ຄວາມ WIFT) ໄປຍັງບຸກຄົນທີ່ສາມທີ່ກຳນົດໄວ້ແລ້ວດຸນບັນຊີທະນາຄານ ແລະຂໍ້ມູນຂ່າວສານການແລກປ່ຽນຊື້ຂາຍທີ່ພົວພັນກັບບັນຊີ ຫຼື ໜຶ່ງ ຫຼື ຫຼາຍບັນຊີຂອງລູກຄ້າກັບທະນາຄານທີສາມ.

(b) ລູກຄ້າເຫັນດີແລະຕົກລົງວ່າໃນເມື່ອຂໍ້ມູນຂ່າວສານກ່ຽວກັບດຸນບັນຊີທະນາຄານ ແລະ ການແລກປ່ຽນຊື້ຂາຍທີ່ພົວພັນກັບບັນຊີຖືກສົ່ງໄປຍັງທະນາຄານທີສາມ:

(i) ຂໍ້ມູນຂ່າວສານດັ່ງກ່າວຈະໄດ້ຮັບການປັບປຸງກໍພຽງແຕ່ໃນວັນທີແລະເວລາໃນການສົ່ງຂໍ້ມູນຂ່າວສານດັ່ງກ່າວໄປຍັງທະນາຄານທີສາມ, ແລະ

(ii) ທະນາຄານບໍ່ມີຄວາມສາມາດຄວບຄຸມການແຈກຢາຍຕໍ່ຂອງຂໍ້ມູນຂ່າວສານດັ່ງກ່າວ ແລະ ບໍ່ຮັບຄວາມຮັບຜິດຊອບ ແລະ ບໍ່ຈຳເປັນຕ້ອງຮັບພາລະໜີ້ສິນສຳລັບການເຄື່ອນໄຫວຂອງທະນາຄານທີສາມທີ່ພົວພັນກັບຂໍ້ມູນຂ່າວສານດັ່ງກ່າວລວມທັງການເປີດເຜີຍຂໍ້ມູນຂ່າວສານດັ່ງກ່າວຂອງທະນາຄານທີສາມໄປຍັງພາກສ່ວນອື່ນໆ.

(c) ລູກຄ້າຮັບຮູ້ ແລະ ຕົກລົງວ່າ ໃນເມື່ອຂໍ້ມູນຂ່າວສານກ່ຽວກັບດຸນບັນຊີ ແລະ ການຊື້ຂາຍທີ່ພົວພັນກັບໜຶ່ງ ຫຼື ຫຼາຍບັນຊີຂອງລູກຄ້າກັບທະນາຄານທີສາມຖືກສົ່ງອອກໄປຫາທະນາຄານໂດຍທະນາຄານທີສາມ:

(i) ທະນາຄານຈະລາຍງານຂໍ້ມູນຂ່າວສານດັ່ງກ່າວໃຫ້ລູກຄ້າຮັບຊາບທຸກຄັ້ງທີ່ໄດ້ຮັບຂໍ້ມູນຂ່າວສານດັ່ງກ່າວເນື່ອງຈາກວ່າທະນາຄານບໍ່ມີວິທີການໃນການຢັ້ງຢືນຄວາມຖືກຕ້ອງແລະຄົບຖ້ວນຂອງຂໍ້ມູນຂ່າວສານດັ່ງກ່າວ. ທະນາຄານບໍ່ຮັບຄວາມຮັບຜິດຊອບແລະຈະບໍ່ຮັບພັນທະໜີ້ສິນສຳລັບຄວາມຖືກຕ້ອງ ຫຼື ຄວາມຄົບຖ້ວນຂອງຂໍ້ມູນຂ່າວສານດັ່ງກ່າວ; ແລະ

(ii) ທະນາຄານບໍ່ຮັບຜິດຊອບ ຫຼື ມີພັນທະໜີ້ສິນສຳລັບການກະທຳຂອງທະນາຄານທີສາມໃຫ້ແກ່ທະນາຄານຍ້ອນຈຸດປະສົງໃດໜຶ່ງ; ແລະ

(d) ລູກຮັບຮູ້ແລະຕົກລົງວ່າຂໍ້ມູນຂ່າວສານກ່ຽວກັບດຸນບັນຊີ ແລະ ການຊື້ຂາຍອາດຈະຖືກສົ່ງ ຫຼື ຮັບຈາກທະນາຄານທີສາມຜ່ານການສື່ສານທາງເອເລັກໂຕຣນິກ ແລະ ການບໍລິການທາງເອເລັກໂຕຣນິກກໍອາດມີຄວາມຊັກຊ້າ, ມີການລົບກວນ ຫຼື ເປ່ເພຍ້ອນຫຼາຍເຫດຜົນ, ການບໍລິການກ່ຽວກັບການລາຍງານຖືກສະໜອງໃຫ້ຕາມທີ່ມີໃນຕົວຈິງ.

4.5 ບົດລາຍງານທີ່ສ້າງຂຶ້ນໂດຍຄອມພິວເຕີ. ການລາຍງານໃດໜຶ່ງຈາກທະນາຄານທີ່ສ້າງຂຶ້ນໂດຍຄອມພິວເຕີບໍ່ຈຳເປັນຕ້ອງມີລາຍເຊັນແລະຕ້ອງໄດ້ອ່ານພ້ອມກັບໃບແຈ້ງສະຖານະພາບບັນຊີທີ່ກ່ຽວຂ້ອງ.

5. ຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆ ແລະ ອາກອນ

5.1 ຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆ. ລູກຄ້າຈະຊຳລະໂດຍບໍ່ມີການໄລ່ລຽງ, ຫັກຄ່າ ຫຼື ຮຽກເກັບຄືນທຸກຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງກັບບັນຊີ ແລະ ການບໍລິການໃນອັດຕາແລະເວລາທີ່ທະນາຄານແຈ້ງມາໃຫ້ລູກຄ້າ, ລວມທັງບັນດາຄ່າໃຊ້ຈ່າຍທີ່ລະບຸໃນແຜນຄ່າທຳນຽມ, ຖ້າມີ.

5.2 ຫ້າມມີໃບແຈ້ງເກັບເງິນ. ຍົກເວັ້ນໄດ້ຮັບການເຫັນດີເປັນຢ່າງອື່ນກັບທະນາຄານ, ຈະບໍ່ມີການອອກໃບແຈ້ງເກັບເງິນຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆຈາກທະນາຄານແລະມູນຄ່າທີ່ລູກຄ້າຍັງຄ້າງຈ່າຍອາດຈະຖືກຫັກອອກຈາກບັນຊີໂດຍບໍ່ຂັດກັບສິ່ງທີ່ວ່າ ການຫັກບັນຊີດັ່ງກ່າວຈະສົ່ງຜົນໃຫ້ ຫຼື ເພີ່ມດຸນບັນຊີໃນບັນຊີດັ່ງກ່າວ.

5.3 ໃບລາຍງານຜົນບັນຊີ. ຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍໃດໜຶ່ງທີ່ຫັກອອກຈາກບັນຊີຈະຖືກປະມວນເຂົ້າໃນໃບລາຍງານຜົນບັນຊີ.

5.4 ອາກອນ. ລູກຄ້າຈະຈ່າຍອາກອນຕ່າງໆທີ່ກ່ຽວຂ້ອງກັບຕົນ ແລະຕ້ອງຈ່າຍໂດຍພົບພັນກັບບັນຊີ ຫຼື ການບໍລິການ, ແລະ ໃນບ່ອນທີ່ກ່ຽວຂ້ອງ ທະນາຄານຈະຫັກເອົາອາກອນດັ່ງກ່າວອອກຈາກບັນຊີໃນເວລານັ້ນທີ່ພົວພັນກັບຄ່າເປີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆທີ່ຫັກເອົາຕາມເງື່ອນໄຂ 5.2.

5.5 ການຮັກສາໄວ້. ທະນາຄານອາດຈະຖືກສະເໜີຕາມກົດໝາຍ ຫຼື ສັນຍາ ຫຼື ຕາມການຈັດວາງກັບອົງການຈັດຕັ້ງພາຍໃນ ຫຼື ຕ່າງປະເທດເພື່ອຫັກ ຫຼື ຮັກສາໄວ້ຈາກການຊຳລະທີ່ເຮັດໃຫ້ລູກຄ້າທີ່ພົວພັນກັບບັນຊີ. ໃນເມື່ອທະນາຄານຖືກສະເໜີໃຫ້ຫັກ ຫຼື ຮັກສາໄວ້ນັ້ນ ລູກຄ້າຮັບຮູ້ ແລະຕົກລົງວ່າການຊຳລະທີ່ກ່ຽວຂ້ອງດັ່ງກ່າວຈະຖືກຫັກເປັນມູນຄ່າຂອງການຫັກ ຫຼື ການຮັກສາໄວ້ດັ່ງກ່າວ.

5.6 ຜົນລວມ. ຖ້າຫາກລູກຄ້າຖືກຮຽກຮ້ອງໃຫ້ຫັກ ຫຼື ຮັກສາໄວເພື່ອເອົາໄວ້ຈ່າຍອາກອນຕາມກົດໝາຍ ມູນຄ່າລວມທີ່ລູກຄ້າຕ້ອງຈ່າຍໃຫ້ທະນາຄານ (ຊຶ່ງກໍ່ໃຫ້ມີການຫັກເກີດຂຶ້ນ) ຈະເພີ່ມຂຶ້ນຕາມຄວາມຈຳເປັນຕົວຈິງເພື່ອຮັບປະກັນວ່າທະນາຄານໄດ້ຮັບຜົນລວມສຸດທີ່ມູນຄ່າຂອງການຫັກ ຫຼື ການຮັກສາໄວ້ເທົ່າກັບຜົນລວມທີ່ທະນາຄານຕ້ອງໄດ້ຮັບຖ້າຫາກຈຳເປັນຕ້ອງໄດ້ຫັກ ຫຼື ຖືກຮຽກຮ້ອງໃຫ້ຫັກ. ລູກຄ້າຈະດຳເນີນການຫັກແລະດຳເນີນການຊຳລະທີ່ຈຳເປັນທີ່ພົວພັນກັບການຫັກດັ່ງກ່າວພາຍໃນເວລາທີ່ກຳນົດໄວ້ ແລະ ໃນມູນຄ່າຕ່ຳສຸດທີ່ຕ້ອງຫັກຕາມກົດໝາຍ.

6. ການຍົກເລີກ ແລະ ການໂຈະ

6.1 ການຍົກເລີກຕາມແຈ້ງການ. ປະຕິບັດຕາມເງື່ອນໄຂ 6.2 ແລະ 6.3 ອາດຈະເປັນລູກຄ້າ ຫຼື ທະນາຄານອາດຈະຍົກເລີກບັນຊີ ຫຼື ການບໍລິການໂດຍການສົ່ງແຈ້ງການເປັນລາຍລັກອັກສອນໄປຍັງອີກຝ່າຍໜຶ່ງຮັບຊາບຢ່າງຊ້າສຸດສາມສິບ(30) ວັນ.

6.2 ການຍົກເລີກແບບກະທັນຫັນ. ທະນາຄານອາດຈະຍົກເລີກບັນຊີ ຫຼື ການບໍລິການເປັນລາຍລັກອັກສອນແບບມີຜົນບັງຄັບທັນທີ (i) ໃນເຫດການທີ່ມີການຍົກເລີກໃນດ້ານຂອງລູກຄ້າ, (ii) ຖ້າຫາກຕາມແນວຄິດຂອງທະນາຄານໄດ້ດຳເນີນຕາມຄຳສັ່ງຂອງລູກຄ້າ ຫຼື ມີການສະໜອງບັນຊີ ຫຼື ການບໍລິການໃດໜຶ່ງໃຫ້ກັບລູກຄ້າອາດຈະກໍ່ໃຫ້ທະນາຄານລະເມີດກົດໝາຍ, ລະບຽບການ ຫຼື ເງື່ອນໄຂໃດໜຶ່ງຂອງອົງການທີ່ມີອຳນາດ, ຫຼື (iii) ຖ້າຫາກທະນາຄານຖືກຮຽກຮ້ອງໃຫ້ເຮັດແນວນັ້ນຕາມກົດໝາຍ ຫຼື ເງື່ອນໄຂໃດໜຶ່ງຂອງອົງກອນທີ່ກ່ຽວຂ້ອງ ຫຼື ນະໂຍບາຍພາຍໃນຂອງທະນາຄານ. ພາຍຫຼັງການຍົກເລີກດັ່ງກ່າວ ພັນທະໃດໜຶ່ງທີ່ຮອດກຳນົດຈາກລູກຄ້າໄປຫາທະນາຄານຈະຕ້ອງເຮັດກຳນົດແລະຕ້ອງຊຳລະທັນທີ.

6.3 ການໂຈະ. ທະນາຄານອາດຈະໂຈະບັນຊີ ຫຼື ການບໍລິການທັງໝົດ ຫຼື ສ່ວນໃດໜຶ່ງ 7 ໂດຍບໍ່ຂັດກັບສິດຂອງຕົນພາຍໃຕ້ເງື່ອນໄຂ 6.2) ຍ້ອນສາເຫດໃດໜຶ່ງໂດຍບໍ່ມີແຈ້ງການລ່ວງໜ້າ ໄປຍັງລູກຄ້າລວມທັງສິ່ງສຸ່ມນີ້:

(a) ບັນຊີ ຫຼື ການສະໜອງການບໍລິການໃດໜຶ່ງແມ່ນອາດຈະເກີດຂໍ້ຂັດແຍ່ງ ຫຼື ການຮຽກຮ້ອງຈາກບຸກຄົນທີສາມ.

(b) ທະນາຄານພິຈາລະນາວ່າບໍ່ມີດຸນບັນຊີທີ່ພຽງພໍໃນບັນຊີ.

(c) ທະນາຄານພິຈາລະນາວ່າມີຄວາມຈຳເປັນໃນການປ້ອງກັນຜົນປະໂຫຍດຂອງຝ່າຍໃດໜຶ່ງທີ່ກ່ຽວຂ້ອງກັບບັນຊີ ຫຼື ການຕອບສະໜອງການບໍລິການ.

(d) ທະນາຄານພິຈາລະນາວ່າມີຄວາມຈຳເປັນໃນການອະທິບາຍອຳນາດຂອງບຸກຄົນທີ່ໄດ້ຮັບອະນຸຍາດ ຫຼື ຕົວແທນໃດໜຶ່ງ (ຖ້າມີ).

(e) ທະນາຄານພິຈາລະນາວ່າບັນຊີ ຫຼື ການບໍລິການບໍ່ຖືກດຳເນີນໃນລັກສະນະທີ່ເໝາະສົມ, ຫຼື

(f) ເຫດການການຍົກເລີກ ຫຼື ເຫດການຍົກເລີກທີ່ອາດເກີດຂື້ນໄດ້ເກີດຂຶ້ນ ຫຼື ຖືກສົງໄສວ່າຈະເກີດຂຶ້ນ.

ທະນາຄານຈະອີງຕາມຂອບເຂດທາງກົດໝາຍໃນການແນະນຳລູກຄ້າໃຫ້ໄວເທົ່າທີ່ຈະໄວໄດ້ຖ້າຫາກບັນຊີ ຫຼື ການສະໜອງການບໍລິການຖືກໂຈະ.

6.4 ບັນດາຄຳສັ່ງທີ່ຄ້າງຄາ. ການຍົກເລີກ ຫຼື ການໂຈະໃດໜຶ່ງໃນບັນຊີ ຫຼື ການບໍລິການຈະຕ້ອງບໍ່ຂັດກັບຄຳສັ່ງທີ່ຄ້າງຄາ ຫຼື ສິດ ຫຼື ພັນທະທີ່ອາດເກີດຂື້ນລະຫວ່າງທະນາຄານ ແລະ ລູກຄ້າກ່ອນການຍົກເລີກດັ່ງກ່າວ ຫຼື ທີ່ໄດ້ນຳສະເໜີໃນບັນດາເງື່ອນໄຂເພື່ອຢູ່ລອດການຍົກເລີກຂອງສັນຍາ.

6.5 ຜົນສະທ້ອນຂອງການຍົກເລີກ. ພາຍຫຼັງມີການຍົກເລີກ:

(a) ທະນາຄານອາດຈະຫັກສ່ວນໃດໜຶ່ງ ແລະທັງໝົດຄ່າໃຊ້ຈ່າຍ ແລະ ຄ່າທຳນຽມທີ່ພົວພັນກັບການຍົກເລີກດັ່ງກ່າວ ແລະ ມູນຄ່າທີ່ຄ້າງຈ່າຍຂອງລູກຄ້າໃຫ້ທະນາຄານພາຍໃຕ້ສັນຍາສະບັບນີ້, ແລະ

(b) ຖ້າຫາກຍັງມີເງິນເຫຼືອພາຍຫຼັງຫັກເງິນ, ທະນາຄານອາດຈະຕັດສິນໃຈໂອນດຸນດັ່ງກ່າວດ້ວຍເຫດຜົນຂອງການເອົາເງິນໃຫ້ ຕາມທີ່ທະນາຄານອາດຈະເຫັນວ່າສົມເຫດສົມຜົນເຂົ້າໃນບັນຊີດັ່ງກ່າວ (ລວມທັງບັນຊີຢູ່ໃນສາຂາອື່ນຂອງທະນາຄານ) ດັ່ງທີ່ເຫັນວ່າເໝາະສົມ ຫຼື ຕາມຄຳສັ່ງຂອງລູກຄ້າ.

6.6 ການຢູ່ລອດຂອງບັນດາເງື່ອນໄຂ. ເງື່ອນໄຂ 1.6 (ຊັບສິນທາງປັນຍາ), ເງື່ອນໄຂ 5 (ເງິນເບີເຊັນ, ຄ່າບໍລິການ, ຄ່າທຳນຽມ, ຄ່າໃຊ້ຈ່າຍຕ່າງໆ ແລະ ອາກອນ), ເງື່ອນໄຂ 7 (ການຈ່າຍຊົດເຊີຍຄ່າເສຍຫາຍ), ແລະ ເງື່ອນໄຂ 8 (ການໄລ່ລຽງ), ເງື່ອນໄຂ 9 (ການເປີດເຜີຍຂໍ້ມູນຂ່າວສານ) ຈະບໍ່ມີການຍົກເລີກບັນຫາ ຫຼື ການບລິການ ຫຼື ສັນຍາສະບັບນີ້.

7. ຄ່າຊົດເຊີຍຜົນເສຍຫາຍ

7.1 ການເສຍຫາຍດ້ານເງິນຕາ. ມູນຄ່າໃດໜຶ່ງທີ່ຮອດກຳນົດແລະຕ້ອງຈ່າຍໂດຍລູກຄ້າໄປຫາທະນາຄານ ພາຍໃຕ້ສັນຍາສະບັບນີ້ຈະຕ້ອງເຮັດເປັນສະກຸນເງິນທີ່ຕົກລົງກັນໄວ້. ຖ້າຫາກຍ້ອນສາເຫດໃດໜຶ່ງມູນຄ່າທີ່ໄດ້ຮັບໂດຍທະນາຄານ (ແລກປ່ຽນຕາມອັດຕາແລກປ່ຽນທ້ອງຕະຫຼາດ) ບໍ່ພຽງພໍຕາມມູນຄ່າໃນສະກຸນເງິນທີ່ຕ້ອງຊຳລະໃຫ້ທະນາຄານ, ລູກຄ້າຈະປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງໃນການຈ່າຍມູນຄ່າທີ່ບໍ່ພໍນັ້ນທັນທີໃນເງິນຕາທີ່ກຳນົດໄວ້ (ແລກປ່ຽນຕາມອັດຕາແລກປ່ຽນທີ່ກ່ຽວຂ້ອງ) ຕາມທີ່ເຫັນວ່າຈຳເປັນເພື່ອທົດແທນມູນຄ່າທີ່ຂາດຫາຍໄປ.

7.2 ການຊົດເຊີຍຄ່າເສຍຫາຍ. ລູກຄ້າຕົກລົງແບບບໍ່ປິ່ນກັບ ແລະ ບໍ່ມີເງື່ອນໄຂເພື່ອຈ່າຍຄ່າຊົດເຊີຍແລະຮັກສາໃຫ້ໄດ້ຮັບຄ່າຊົດເຊີຍ ແລະ ຮັບປະກັນບໍ່ໃຫ້ມີຜົນເສຍຫາຍຕໍ່ທະນາຄານ, ຜູ້ອຳນວຍການ, ພະນັກງານ, ລູກຈ້າງ, ຕົວແທນ ແລະ ຜູ້ຕາງໜ້າຂອງທະນາຄານໂດຍເຕັມສ່ວນ ແລະ ຄົບຖ້ວນ

ທຸກໆເວລາຈາກ ແລະ ຕ້ານກັບ ສ່ວນໃດໜຶ່ງ ຫຼື ທັງໝົດຂອງການຂາດທຶນທີ່ທະນາຄານ ແລະ ຜູ້ອໍານວຍການ, ພະນັກງານ, ລູກຈ້າງ, ຕົວແທນ ແລະ ຜູ້ຕາງໜ້າຂອງທະນາຄານດັ່ງກ່າວອາດຈະ ພົບ, ເກີດບັນຫາ ຫຼື ສືບຕໍ່ຮັບໂດຍພົວພັນກັບ (i) ທະນາຄານທີ່ສະໜອງບັນຊີດັ່ງກ່າວ ຫຼື ການ ບໍລິການໃດໜຶ່ງໃຫ້ແກ່ລູກຄ້າ, (ii) ການນໍາໃຊ້ ບັນຊີ ຫຼື ການບໍລິການຂອງລູກຄ້າ, (iii) ຄວາມ ຫຼົ້ມເຫຼວຂອງລູກຄ້າ (ຫຼື ຕົວແທນ), ໃນການດໍາ ເນີນ ຫຼື ປະຕິບັດພັນທະໃດໜຶ່ງຂອງສັນຍາສະບັບ ນີ້, (iv) ທະນາຄານທີ່ດໍາເນີນ ຫຼື ປະຕິເສດໃນ ການກະທໍາຕາມຄໍາສັ່ງຂອງລູກຄ້າ ຫຼື ຄໍາສັ່ງ ໃດໜຶ່ງ ຫຼື ການສະເໜີທີ່ທະນາຄານມີເຫດຜົນ ພຽງພໍໃນການເຊື່ອວ່າໄດ້ເອົາໃຫ້ໂດຍ ຫຼື ໃນນາມ ລູກຄ້າໂດຍບໍ່ກ່ຽວວ່າຈະໃຊ້ຊ່ອງທາງໃດ. ເພື່ອຫຼີກ ເວັ້ນຂໍ້ສົງໄສ ການຊົດເຊີຍທີ່ກ່າວມາຂ້າງເທິງຈະ ລວມເອົາພັນທະໜີ້ສິນໃນດ້ານອາກອນ ແລະ ການ ຂາດດຸນໃດໜຶ່ງ ແລະ ການຂາດທຶນແບບບໍ່ທັນເກີດ ຂຶ້ນໃນບັນຊີ.

7.3 ການຊົດເຊີຍຂອງອີງກອນ. ໂດຍບໍ່ຂັດກັບ ເງື່ອນໄຂ 7.2 (ການຊົດເຊີຍສໍາລັບການຂາດທຶນ), ລູກຄ້າ ແລະ ຕົວແທນຂອງມັນໂດຍບໍ່ປີ້ນກັບ ແລະ ບໍ່ມີເງື່ອນໄຂ, ໃນພື້ນຖານຫຼາຍສາເຫດ ລວມກັນ, ຕົກລົງຈ່າຍຄ່າຊົດເຊີຍແລະຮັກສາໃຫ້ ໄດ້ຮັບຄ່າຊົດເຊີຍ ແລະຮັກສາບໍ່ໃຫ້ມີຜົນກະທົບ ທະນາຄານ ແລະ ຜູ້ອໍານວຍການ, ພະນັກງານ, ຕົວແທນ ແລະ ຜູ້ຕາງໜ້າຢ່າງເຕັມສ່ວນ ແລະ ຄົບຖ້ວນໃນທຸກໆເວລາຈາກ ແລະ ຕ້ານກັບສ່ວນ ໜຶ່ງ ຫຼື ທັງໝົດຂອງການຂາດທຶນທີ່ທະນາຄານ ແລະ ຜູ້ອໍານວຍການ, ຜູ້ບໍລິຫານ, ພະນັກງານ, ຕົວແທນ ແລະ ຜູ້ຕາງໜ້າອາດຈະປະເຊີນ, ເກີດມີ ຫຼື ສືບຕໍ່ມີຍ້ອນຜົນທີ່ທະນາຄານຮັບການນັດຂອງ ຕົວແທນດັ່ງກ່າວ ຫຼື ການກະທໍາໃດໜຶ່ງຂອງຕົວ ແທນ.

8. ການໄລ່ລຽງ

8.1 ທະນາຄານອາດຈະໃນເວລາທີ່ເໝາະສົມ ແລະ ສອດຄ່ອງກັບລະບຽບກົດໝາຍແລະໂດຍບໍ່ມີ ການແຈ້ງໃຫ້ລູກຄ້າຮັບຊາບ ໄລ່ລຽງໜີ້ສິນທີ່ລູກຄ້າ ມີຕໍ່ສາຂາໃດໜຶ່ງ ຫຼື ຫ້ອງການຂອງ ANZ ກັບໜີ້ສິນທີ່ສາຂາ, ຫ້ອງການ ຫຼື ANZ ຫຼື ສາຂາ ຂອງ ANZ ທີ່ມີຕໍ່ລູກຄ້າ.

8.2 ສິດທີ່ກໍານົດໃນເງື່ອນໄຂ 8.1 ຂ້າງເທິງມີຜົນ ບັງຄັບໃຊ້ກັບສະກຸນເງິນທີ່ໜີ້ສິນດັ່ງກ່າວມີຢູ່ ແລະ ບໍ່ກ່ຽວວ່າໜີ້ສິນຂອງທະນາຄານ ຫຼື ໜີ້ສິນຂອງລູກ ຄ້າຈະເກີດຂຶ້ນໃນປະຈຸບັນ ຫຼື ອະນາຄົດ, ຮອດ ກໍານົດ ຫຼື ບໍ່ຮອດກໍານົດ, ຕົວຈິງ ຫຼື ທ້າງໄວ້ເພື່ອ ສຸກເສີນ ແລະ ບໍ່ວ່າພັນທະໜີ້ສິນດັ່ງກ່າວມີຫຼາຍ ອັນ ຫຼື ຮວມເຂົ້າກັນກັບອັນອື່ນ ຫຼື ຕາມຫຼັກການ ຫຼື ຄວາມໝັ້ນໃຈ. ໃນເວລານໍາໃຊ້ສິດດັ່ງກ່າວມີ ການແລກປ່ຽນເງິນ, ທະນາຄານຈະນໍາໃຊ້ອັດຕາ ແລກປ່ຽນທີ່ເຫັນວ່າສົມເຫດສົມຜົນ. ຖ້າຫາກວ່າ ໜີ້ສິນໃດໜຶ່ງບໍ່ໄດ້ຮັບການຮັບປະກັນ, ທະນາຄານ ອາດຈະປະເມີນມູນຄ່າຂອງໜີ້ສິນດັ່ງກ່າວດ້ວຍ ຄວາມຈິງໃຈ.

8.3 ຈະບໍ່ມີຫຍັງໃນເງື່ອນໄຂ 8 ນີ້ ຈະມີຜົນສັກ ສິດຕໍ່ການສ້າງຄ່າທໍານຽມ ຫຼື ດອກເບ້ຍປະກັນໄພ ອື່ນໆ. ເງື່ອນໄຂທີ 8 ໂດຍບໍ່ຂັດກັບແລະນອກຈາກ ສິດໃນການໄລ່ລຽງ, ສະຫຼັບ, ປະສົມປະສານບັນຊີ, ສິດໃນການຮັກສາ ຫຼື ຮັກສາໄວ້ ຫຼື ສິດທີ່ຄ້າຍຄື ຫຼື ເງື່ອນໄຂທີ່ຝ່າຍໃດໜຶ່ງໃນທຸກໆເວລາອາດຈະມີ ສິດ ຫຼື ປະຕິບັດ (ຊຶ່ງອາດຈະແມ່ນຍ້ອນລະບຽບ ກົດໝາຍ, ສັນຍາ ຫຼື ອື່ນໆ).

9. ການເປີດເຜີຍຂໍ້ມູນຂ່າວສານ

9.1 ການອະນຸມັດການເປີດເຜີຍ. ລູກຄ້າຕົກລົງ ແລະຮັບຮູ້ວ່າທະນາຄານມີສິດເປີດເຜີຍຂໍ້ມູນຂ່າວ

ສານໃດໜຶ່ງທີ່ພົວພັນກັບລູກຄ້າ (ລວມທັງຂໍ້ມູນຂ່າວສານທີ່ພົວພັນກັບການຊື້ຂາຍ, ສະພາບການເງິນ, ບັນຊີ ແລະ ການບໍລິການ) ໃຫ້ພາກສ່ວນໃດໜຶ່ງ ຫຼື ທັງໝົດດັ່ງລຸ່ມນີ້:

(a) ສາຂາໃດໜຶ່ງຂອງລູກຄ້າ;

(b) ຜູ້ຮັບການມອບໝາຍຕົວຈິງ ຫຼື ພວມຮັບການສະເໜີຮັບການມອບໝາຍຂອງທະນາຄານ, ຫຼື ຜູ້ເຂົ້າຮ່ວມ ຫຼື ຜູ້ເຂົ້າຮ່ວມຍ່ອຍໃນ ຫຼື ຜູ້ໄດ້ຮັບການໂອນສິດບາງສ່ວນທີ່ພົວພັນກັບລູກຄ້າພາຍໃຕ້ໜ້າທີ່ການຮັກສາຄວາມລັບໃຫ້ທະນາຄານ ຫຼື ສະມາຊິກກຸ່ມທະນາຄານ;

(c) ຫ້ອງການ, ສາຂາ, ຜູ້ມີສ່ວນຮ່ວມ, ບໍລິສັດລູກ, ພະນັກງານ ຫຼື ຕົວແທນຂອງທະນາຄານ;

(d) ຜູ້ກວດສອບ ຫຼື ທີ່ປຶກສາມືອາຊີບຂອງທະນາຄານ ຫຼື ສະມາຊິກກຸ່ມທະນາຄານໃດໜຶ່ງທີ່ມີສິດໃນການຮັກສາຄວາມລັບໃຫ້ທະນາຄານ ຫຼື ສະມາຊິກກຸ່ມທະນາຄານ;

(e) ບຸກຄົນທີສາມ ຫຼື ຜູ້ສະໜອງລະບົບບຸກຄົນທີສາມຂອງທະນາຄານ ຫຼື ສະມາຊິກກຸ່ມທະນາຄານ;

(f) ຜູ້ສະໜອງການບໍລິການບຸກຄົນທີສາມໃດໜຶ່ງທີ່ທ່ານອາດຈະສະເໜີຂໍການບໍລິການໂດຍຜ່ານທະນາຄານ;

(g) ອົງການທີ່ກ່ຽວຂ້ອງໃດໜຶ່ງ;

(h) ບຸກຄົນໃດໜຶ່ງໃນເມື່ອຖືກຮຽກຮ້ອງໃຫ້ເຮັດເຊັ່ນນັ້ນໂດຍສອດຄ່ອງຕາມຂະບວນການສືບສວນ ຫຼື ຂະບວນການສານໃດໜຶ່ງທີ່ອອກໃຫ້ໃນລະບົບການຄຸ້ມຄອງທີ່ກ່ຽວຂ້ອງ;

(i) ບຸກຄົນໃດໜຶ່ງໃນເມື່ອຖືກສະເໜີໃຫ້ເຮັດເຊັ່ນນັ້ນຕາມກົດໝາຍໃນລະບົບການປົກຄອງໃດໜຶ່ງ;

(j) ອົງການຈັດຕັ້ງພາຍໃນ ຫຼື ຕ່າງປະເທດທີ່ທະນາຄານ ຫຼື ສະມາຊິກກຸ່ມທະນາຄານມີສັນຍາ ຫຼື ການຈັດວາງໃດໜຶ່ງນຳທີ່ຮຽກຮ້ອງໃຫ້ຂໍ້ມູນຂ່າວສານກ່ຽວກັບລູກຄ້າ ຫຼື ບັນຊີມີການເປີດເຜີຍ ຊຶ່ງການເປີດເຜີຍດັ່ງກ່າວອາດຈະແມ່ນທະນາຄານເຮັດໂດຍກົງ ຫຼື ໂດຍຜ່ານສະມາຊິກກຸ່ມທະນາຄານໃດໜຶ່ງ.

ລູກຄ້າຍັງຕົກລົງແລະຮັບຮູ້ວ່າສະມາຊິກກຸ່ມທະນາຄານໃດໜຶ່ງອາດຈະໂອນສ່ວນໃດໜຶ່ງຂອງຂໍ້ມູນຂ່າວສານຂ້າງເທິງໄປຍັງຝ່າຍໃດໜຶ່ງທີ່ລະບຸຂ້າງເທິງໄປຍັງບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ເປີດເຜີຍຂໍ້ມູນຂ່າວສານດຽວກັນໂດຍບໍ່ຂັດກັບສິ່ງທີ່ວ່າສະຖານທີ່ດຳເນີນທຸລະກິດຫຼັກຂອງບຸກຄົນດັ່ງກ່າວຕັ້ງຢູ່ນອກປະເທດຂອງລູກຄ້າຂອງການສ້າງຕັ້ງແລະດຳເນີນທຸລະກິດ ຫຼື ຂໍ້ມູນຂ່າວສານດັ່ງກ່າວ ການເປີດເຜີຍລຸ່ມນີ້ຈະຖືກຮວບຮວມ, ເກັບຮັກສາ, ປຸງແຕ່ງ, ນຳໃຊ້ໂດຍບຸກຄົນດັ່ງກ່າວທັງໝົດ ຫຼື ສ່ວນໃດໜຶ່ງຢູ່ນອກປະເທດທີ່ລູກຄ້າສ້າງຕັ້ງແລະດຳເນີນບໍລິສັດ.

<u>10. ການດັດແກ້ ແລະ ການລົບລ້າງ</u>

<u>10.1 ການດັດປັບ.</u> ການສະໜອງສັນຍາສະບັບນີ້ອາດຈະໃນເວລາໃດໜຶ່ງແລະໂດຍບໍ່ມີແຈ້ງການລ່ວງໜ້າໃຫ້ແກ່ລູກຄ້າຕ້ອງຖືກດັດປັບ, ດັດແກ້ ຫຼື ເພີ່ມເຕີມໂດຍທະນາຄານ ແລະ ການດັດແປງດັ່ງກ່າວຈະຖືກແຈ້ງໃຫ້ລູກຄ້າຮັບຊາບ.

<u>10.2 ການລົບລ້າງ.</u> ການລົບລ້າງສິດ, ອຳນາດ ແລະ ເນື້ອໃນໃດໜຶ່ງຂອງທະນາຄານໂດຍທະນາຄານເອງຈະມີຜົນສັກສິດກໍ່ຕໍ່ເມື່ອມີລາຍເຊັນເປັນລາຍລັກອັກສອນຈາກທະນາຄານ.

<u>11. ການໂອນ</u>

<u>11.1 ການໂອນໂດຍລູກຄ້າ.</u> ລູກຄ້າອາດຈະບໍ່ໂອນ ຫຼື ມອບໝາຍສ່ວນໃດໜຶ່ງຂອງສິດ ແລະ ພັນທະຂອງຕົນພາຍໃຕ້ສັນຍາສະບັບນີ້ໂດຍບໍ່ໄດ້ຮັບການເຫັນດີເຫັນພ້ອມເປັນລາຍລັກອັກສອນຈາກທະນາຄານ.

<u>11.2 ການໂອນໂດຍທະນາຄານ.</u> ທະນາຄານອາດຈະມອບໝາຍ, ແຕ່ງຕັ້ງ, ໂອນ ຫຼື ດ້ວຍວິທີໃດ

ໜຶ່ງປະຕິບັດທັງໝົດ ຫຼື ສ່ວນໜຶ່ງຂອງສິດ ແລະ/ຫຼື ພັນທະພາຍໃຕ້ສັນຍາສະບັບນີ້ໂດຍບໍ່ຈຳເປັນຂໍການເຫັນດີເຫັນພ້ອມຂອງລູກຄ້າ (ຫຼື ຂອງບຸກຄົນອື່ນໃດໜຶ່ງ). ລູກຄ້າຕົກລົງວ່າຈະປະຕິບັດຕາມການສະເໜີຢ່າງສົມເຫດສົມຜົນ ທີ່ທະນາຄານອາດຈະຕ້ອງມີການມອບໝາຍສິດ, ແຕ່ງຕັ້ງ ຫຼື ໂອນ ລວມທັງການສ້າງເອກະສານໃດໜຶ່ງ ຫຼື ດຳເນີນກິດຈະການໃດໜຶ່ງທີ່ທະນາຄານອາດຈະຕ້ອງການໃນສັນຍາສະບັບນີ້.

12. ບັນຍັດທົ່ວໄປ

12.1 ສິດຂອງບຸກຄົນທີສາມ. ຍົກເວັ້ນສັນຍານຳສະເໜີຢ່າງເປີດເຜີຍເປັນຢ່າງອື່ນ, ບຸກຄົນທີ່ບໍ່ແມ່ນຝ່າຍໃດໜຶ່ງໃນສັນຍາສະບັບນີ້ຈະບໍ່ມີສິດນຳໃຊ້ບັນຍັດໃດໜຶ່ງຂອງສັນຍາສະບັບນີ້. ເພື່ອຫຼີກເວັ້ນຂໍ້ສົງໄສ ການເຫັນດີເຫັນພ້ອມຂອງບຸກຄົນໃດໜຶ່ງທີ່ບໍ່ແມ່ນຝ່າຍໜຶ່ງຂອງສັນຍາສະບັບນີ້ ບໍ່ຖືກຮຽກຮ້ອງໃຫ້ດັດແກ້ສັນຍາສະບັບນີ້.

12.2 ສ່ວນປະກອບຂອງສັນຍາ. ສັນຍາສະບັບນີ້ປະກອບເປັນສັນຍາທີ່ຄົບຖ້ວນລະຫວ່າງທະນາຄານແລະລູກຄ້າແລະລູກຄ້າໃນປະເດັນກ່ຽວກັບບັນຊີທີ່ຕົນມີ ແລະ ການບໍລິການທີ່ສະໜອງໃຫ້ກັບລູກຄ້າ. ບໍ່ມີການສື່ສານໃດໜຶ່ງລະຫວ່າງທະນາຄານ ຫຼື ຕົວແທນຂອງມັນ ກັບລູກຄ້າປະກອບເປັນສ່ວນໜຶ່ງຂອງສັນຍາສະບັບນີ້. ໂດຍພົວພັນກັບບັນຊີ ຫຼື ການບໍລິການ, ສັນຍາສະບັບນີ້ຈະມີຜົນນຳໃຊ້ປ່ຽນແທນກັບຫຼັກການລວມອື່ນໆຂອງທຸລະກິດທີ່ລູກຄ້າໄດ້ຮັບ ຫຼື ອາດໄດ້ຮັບຈາກທະນາຄານ.

12.3 ບັນຍັດທີ່ບໍ່ຖືກຕ້ອງ, ຜິດກົດໝາຍ ຫຼື ບໍ່ສາມາດໃຊ້ໄດ້. ຄວາມບໍ່ຖືກຕ້ອງ, ຄວາມຜິດກົດໝາຍ ຫຼື ຄວາມບໍ່ສາມາດໃຊ້ໄດ້ຂອງບັນຍັດໃດໜຶ່ງຂອງສັນຍາສະບັບນີ້ຈະບໍ່ກະທົບໃສ່ ຫຼື ສ້າງຄວາມເສຍຫາຍຕໍ່ການສືບຕໍ່ມີຜົນສັກສິດຂອງບັນຍັດອື່ນໆຂອງສັນຍາສະບັບນີ້. ລູກຄ້າອາດຈະສະເໜີໃຫ້ທະນາຄານອາດຈະປ່ຽນແທນບັນຍັດໃດໜຶ່ງທີ່ບໍ່ຖືກຕ້ອງ, ຜິດກົດໝາຍ ຫຼື ບໍ່ສາມາດໃຊ້ໄດ້ ດ້ວຍບັນຍັດທີ່ຖືກຕ້ອງ ຖືກກົດໝາຍ ແລະ ສາ ມາດນຳໃຊ້ໄດ້ທີ່ສາມາດບັນລຸໃນຂອບເຂດທີ່ກວ້າງຂວາງເທົ່າທີ່ຈະກວ້າງໄດ້ໃນດ້ານຈຸດປະສົງທາງເສດຖະກິດ, ກົດໝາຍ ແລະ ການຄ້າຂອງບັນດາບັນຍັດທີ່ຖືກຕ້ອງ ຖືກກົດໝາຍ ແລະ ສາມາດບັງຄັບນຳໃຊ້ໄດ້.

12.4 ການນຳໃຊ້ສິດແລະການແກ້ໄຂ. ການທີ່ບໍ່ສາມາດນຳໃຊ້ ຫຼື ຊັກຊ້າໃນການນຳໃຊ້ສິດ ຫຼື ການແກ້ໄຂ ທີ່ຂໍ້ຕົກລົງສະບັບນີ້ກຳນົດ ຫຼື ກົດໝາຍ ຈະບໍ່ເປັນການລົບກວນ ຫຼື ບໍ່ໝາຍຄວາມວ່າເປັນການລົບລ້າງສິດ ຫຼື ການແກ້ໄຂໃດໜຶ່ງ ຫຼື ເປັນການລົບກວນການລົບລ້າງສິດ ຫຼື ການແກ້ໄຂໃດໜຶ່ງ. ຈະບໍ່ມີການນຳໃຊ້ສິດໃດໜຶ່ງ ຫຼື ສ່ວນໃດໜຶ່ງ ຕາມທີ່ສັນຍາສະບັບນີ້ ຫຼື ກົດໝາຍສະໜອງໃຫ້ຈະເປັນການເກືອດຫ້າມການນຳໃຊ້ສິດ ຫຼື ການແກ້ໄຂ ຫຼື ການນຳໃຊ້ສິດ ຫຼື ການແກ້ໄຂອື່ນໃດໜຶ່ງ.

12.5 ຈຳນວນເອກະສານ. ສັນຍາສະບັບນີ້ອາດປະກອບດ້ວຍຫຼາຍສະບັບ, ແຕ່ລະສະບັບມີລາຍເຊັນຂອງໜຶ່ງ ຫຼື ຫຼາຍຝ່າຍໃນສັນຍາສະບັບນີ້. ສະບັບທີ່ມີລາຍເຊັນດັ່ງກ່າວນັ້ນປະກອບເປັນເອກະສານດຽວ.

12.6 ການບໍ່ສອດຄ່ອງກັນ. ໃຫເຫດການທີ່ມີຄວາມບໍ່ສອດຄ່ອງໃດໜຶ່ງເກີດຂຶ້ນລະຫວ່າງ:

(a) ບັນດາເງື່ອນໄຂ ແລະ ແຜນການບໍລິການໃດໜຶ່ງ ຫຼື ບັນດາຫຼັກການແລະເງື່ອນໄຂໃນການປະກອບເອກະສານເປີດບັນຊີ, ໂຕທີສອງຈະເປັນສະບັບທີ່ຖືກຕ້ອງ.

(b) ບັນດາເງື່ອນໄຂແລະແຜນລະດັບປະເທດໃດໜຶ່ງ, ແຜນລະດັບປະເທດຈະເປັນອັນຖືກຕ້ອງ.

(c) ບັນດາເງື່ອນໄຂແລະແຜນການສ້າງຝ່າຍຮ່ວມງານ, ແຜນການສ້າງຝ່າຍຮ່ວມງານຈະເປັນອັນຖືກຕ້ອງ.

(d) ສະບັບພາສາອັງກິດ ແລະ ສະບັບແປເປັນພາສາອື່ນ, ສະບັບເປັນພາສາອັງກິດເປັນສະບັບຖືກຕ້ອງ.

13. ແຈ້ງການ

13.1ແຈ້ງການໃດໜຶ່ງ ຫຼື ການສື່ສານອື່ນໆທີ່ພົວພັນກັບສັນຍາສະບັບນີ້ ອາດຈະຖືກສ້າງຂຶ້ນດ້ວຍສິດທິການທີ່ກຳນົດດັ່ງລຸ່ມນີ້ສົ່ງໄປຍັງທີ່ຢູ່, ເລກໂທ, ອີເມລ໌ ທີ່ລະບຸໃນເອກະສານເປີດບັນຊີ ແລະ ຈະຖືວ່າມີຜົນສັກສິດດັ່ງທີ່ກຳນົດ:

(a) ຖ້າຫາກວ່າເປັນເອກະສານເປັນລາຍລັກອັກສອນ ແລະ ຈັດສົ່ງດ້ວຍຕົນເອງ ຫຼື ໄປສະນີ, ໃນວັນທີທີ່ໄດ້ຈັດສົ່ງ.

(b) ຖ້າເປັນການສົ່ງດ້ວຍແຟັກຈະມີຜົນສັກສິດໃນມື້ສົ່ງ ເອກະສານທີ່ສົ່ງໄປສາມາດອ່ານໄດ້.

(c) ຖ້າໄດ້ສົ່ງໄປທາງເອກະສານລົງທະບຽນ (ສົ່ງທາງຍົນ ຖ້າສົ່ງອອກນອກປະເທດ) ຫຼື ທຽບເທົ່າ (ຕ້ອງມີໃບຮັບຄືນພ້ອມ), ໃນວັນທີທີ່ຈົດໝາຍດັ່ງກ່າວຖືກນຳສົ່ງ ຫຼື ມີຄວາມພະຍາຍາມຈະຈັດສົ່ງ; ຫຼື

(d) ຖ້າສົ່ງທາງອີເມລ໌ ແມ່ນໃນວັນທີສົ່ງນັ້ນ ຍົກເວັ້ນວັນທີຈັດສົ່ງດັ່ງກ່າວ (ຫຼື ຄວາມພະຍາຍາມສົ່ງນັ້ນ) ຫຼື ການຮັບ, ແລ້ວແຕ່ກໍລະນີ, ບໍ່ແມ່ນວັນລັດຖະການ ຫຼື ການສື່ສານດັ່ງກ່າວຖືກນຳສົ່ງ (ຫຼື ພະຍາຍາມສົ່ງ) ຫຼື ໄດ້ຮັບ, ແລ້ວແຕ່ກໍລະນີ, ພາຍຫຼັງຊົ່ວໂມງການຂອງວັນລັດຖະການ, ຊຶ່ງໃນກໍລະນີດັ່ງກ່າວ ການສື່ສານຈະຖືວ່າໄດ້ສົ່ງຮຽບຮ້ອຍແລະມີຜົນໃຊ້ໃນມື້ທຳອິດຂອງວັນລັດຖະການຕໍ່ໄປ.

14. ກົດໝາຍແລະການປົກຄອງທີ່ກ່ຽວຂ້ອງ

14.1 ກົດໝາຍແລະການປົກຄອງທີ່ກ່ຽວຂ້ອງ. ທີ່ໄດ້ກ່າວມາທັງໝົດໃນສັນຍາສະບັບນີ້ແມ່ນເນັ້ນບັນດາປະເດັນທີ່ພົວພັນກັບການດຳເນີນງານຂອງບັນຊີ ຫຼື ການສະໜອງການບໍລິການ, ບັນດາປະເດັນທີ່ເກີດຂຶ້ນກັບສິ່ງຕ່າງໆດັ່ງກ່າວນັ້ນແມ່ນຢູ່ພາຍໃຕ້ກົດໝາຍຂອງລະບອບການປົກຄອງທີ່ບັນຊີດັ່ງກ່າວເປີດນຳໃຊ້ ຫຼື ການບໍລິການດັ່ງກ່າວໄດ້ຖືກຕອບສະໜອງ (ດັ່ງທີ່ທະນາຄານກຳນົດ), ຕາມລຳດັບ, ໃນເງື່ອນໄຂທີ່ວ່າສິ່ງຕ່າງໆທີ່ກ່າວມາແລ້ວນັ້ນໃນສັນຍາສະບັບນີ້ເວົ້າເຖິງບັນດາປະເດັນທີ່ພົວພັນກັບການບໍລິການທີ່ສະໜອງໃຫ້ໂດຍມີການພົວພັນກັບບັນຊີໃນໜຶ່ງ ຫຼື ຫຼາຍລະບອບປົກຄອງ (ດັ່ງທີ່ທະນາຄານກຳນົດ) ຫຼື ປະເດັນດັ່ງກ່າວບໍ່ມີການພົວພັນກັບການດຳເນີນບັນຊີ ຫຼື ການສະໜອງການບໍລິການ, ດັ່ງນັ້ນບັນດາປະເດັນດັ່ງກ່າວທີ່ເກີດຂຶ້ນຈາກ ແລະມີການພົວພັນກັບພວກມັນນັ້ນຈະຢູ່ພາຍໃຕ້ການຄຸ້ມຄອງຂອງກົດໝາຍຂອງປະເທດອັງກິດ (ລະບົບການປົກຄອງທີ່ມີກົດໝາຍທີ່ກ່ຽວຂ້ອງທີ່ນຳໃຊ້ ຊຶ່ງເອີ້ນວ່າ “ລະບົບການປົກຄອງທີ່ກ່ຽວຂ້ອງ”. ຝ່າຍຕ່າງໆຈະສົ່ງເລື່ອງໄປຫາລະບົບການປົກຄອງຂອງສານຂອງລະບົບການປົກຄອງທີ່ກ່ຽວຂ້ອງທັງໝົດ.

14.2 ການລົບລ້າງການຕ້ານທານ. ລູກຄ້າຈະລົບລ້າງຢ່າງບໍ່ມີວັນປີ້ນກັບອຳນາດອະທິປະໄຕ ຫຼື ການຕ້ານທານອື່ນທີ່ລູກຄ້າອາດຈະມີໃນລະບົບການປົກຄອງໃດໜຶ່ງຈາກການດຳເນີນການທາງກົດໝາຍ, ການຕິດພັນກ່ອນ ຫຼື ຫຼັງການຕັດສິນ ຫຼື ການດຳເນີນການຕັດສິນ.

14.3 ການບໍລິການຂອງຂະບວນການ. ຖ້າຫາກວ່າທະນາຄານສະເໜີ, ລູກຄ້າຈະແຕ່ງຕັ້ງໂດຍບໍ່ປີ້ນກັບຕົວແທນທາງຂະບວນການໃຫ້ເປັນຕົວແທນຂອງລູກຄ້າໃນການຮັບເອກະສານໃດໜຶ່ງໃນ

ການດຳເນີນການຂອງສານທີ່ພົວພັນກັບສັນຍາ ສະບັບນີ້ ແລະ ແຈ້ງໃຫ້ທະນາຄານຊື່ ແລະ ທີ່ຢູ່ ຂອງຕົວແທນດັ່ງກ່າວ. ຖ້າຫາກລູກຄ້າບໍ່ແຕ່ງຕັ້ງ ຕົວແທນທາງຂະບວນການພາຍໃນເຈັດ (7) ວັນ ຕາມປະຕິທິນພາຍຫຼັງການສະເໜີດັ່ງກ່າວ ທະນາ ຄານຈະມີສິດໃນການແຕ່ງຕັ້ງຕົວແທນທາງຂະບວນ ການໃຫ້ແກ່ ແລະ ຕາງໜ້າໃຫ້ລູກຄ້າ ແລະ ທະນາຄານອາດຈະ (ແຕ່ບໍ່ຈຳເປັນຕ້ອງເຮັດເຊັ່ນ ນັ້ນ) ແຈ້ງໃຫ້ລູກຄ້າຊື່ ແລະ ທີ່ຢູ່ຂອງຕົວແທນ ທາງຂະບວນການທີ່ຕົນແຕ່ງຕັ້ງ. ຖ້າມີຄ່າໃຊ້ຈ່າຍ ໃດໆທີ່ພົວພັນກັບການແຕ່ງຕັ້ງດັ່ງກ່າວ ລູກຄ້າຈະ ເປັນຄົນຮັບຜິດຊອບ.